ສຳນັກງານໃຫຍ່

ເລກທີ: 01 /ທຄຕລ....2020.....

ນະຄອນຫຼວງວຽງຈັນ, ວັນທີ: .....06 MAY 2020.....

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທີ່ນັບຖື.

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019

- ອີງຕາມການຕົກລົງເຫັນດີຂອງສະມາຊິກສະພາບໍລິຫານຄັ້ງວັນທີ 06/05/2020

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນ ທຄຕລ ເຂົ້າຮ່ວມ**ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ໃນວັນທີ 29/05/2020 ເວລາ 14:30 ໂມງ (ເລີ່ມລົງທະບຽນເວລາ 13:00 – 14:30 ໂມງ) ທີ່ ຫ້ອງປະຊຸມ Grand Ballroom ໂຮງແຮມແລນມາກແມ່ຂອງຣິເວີໄຊ**, ນະຄອນ ຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ທຄຕລ ໄດ້ແຈ້ງໃຫ້ບໍລິສັດຕະຫຼາດຫຼັກຊັບລາວ ໃນການກຳນົດເອົາວັນທີ **01/04/2020 ເປັນມື້ປິດບັນຊີທະບຽນຜູ້ຖືຮຸ້ນ** ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ແລະ ສິດໃນການຮັບເງິນປັນຜົນປະຈຳປີ 2019. ສະນັ້ນ, ທຄຕລ ຈຶ່ງຖືເອົາຕາມບັນຊີທະບຽນຜູ້ຖືຮຸ້ນຈາກບໍລິສັດຕະຫຼາດຫຼັກຊັບລາວ ເພື່ອກຳນົດສິດດັ່ງກ່າວຂອງຜູ້ຖືຮຸ້ນ.

ຜູ້ຖືຮຸ້ນແຕ່ລະທ່ານ **ຈະຕ້ອງໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ)** ພ້ອມເອກະສານຄັດຕິດຕ່າງໆຢູ່ຕະຫຼາດຫຼັກຊັບລາວ ເພື່ອແຈ້ງລົງທະບຽນເຂົ້າຮ່ວມກອງປະຊຸມ.

ເພື່ອປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19, **ທຄຕລ ສົ່ງເສີມໃຫ້ຜູ້ຖືຮຸ້ນມອບສິດໃຫ້ສະມາຊິກສະພາບໍລິຫານອິດສະຫຼະທ່ານໃດໜຶ່ງເປັນຜູ້ຕາງເຂົ້າຮ່ວມປະຊຸມແທນ** ໂດຍປະກອບແບບຟອມໃບມອບສິດທີ່ຄັດຕິດມາພ້ອມນີ້ ແລ້ວສົ່ງໃຫ້ສະມາຊິກສະພາບໍລິຫານຜູ້ດັ່ງກ່າວໂດຍກົງກ່ອນມື້ປະຊຸມ. ສຳລັບຜູ້ຖືຮຸ້ນທີ່ສະດວກເຂົ້າຮ່ວມປະຊຸມດ້ວຍຕົນເອງນັ້ນ ຕ້ອງປະຕິບັດມາດຕະການປ້ອງກັນຢ່າງເໝາະສົມ ເປັນຕົ້ນແມ່ນໃສ່ຜ້າອັດປາກ-ອັດດັງ, ລ້າງມືໃຫ້ສະອາດ ແລະ ຮັກສາໄລຍະຫ່າງຕະຫຼອດເວລາເຂົ້າຮ່ວມປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ປະທານສະພາບໍລິຫານ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບຸນເຫຼືອ ສົນໄຊວໍຣະວົງ

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 (ເອກະສານຄັດຕິດ 1)
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 (ເອກະສານຄັດຕິດ 2)
3. ບົດລາຍງານການເຄື່ອນໄຫວດຳເນີນງານຂອງ ທຄຕລ ປະຈຳປີ 2019 ໂດຍຫຍໍ້ (ເອກະສານຄັດຕິດ 3)
4. ບົດລາຍງານຖານະການເງິນປະຈຳປີ 2019 ທີ່ຜ່ານການກວດສອບ (ເອກະສານຄັດຕິດ 4)
5. ແຜນການປີ 2020 (ເອກະສານຄັດຕິດ 5)
6. ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ (ເອກະສານຄັດຕິດ 6)
7. ແບບຟອມໃບມອບສິດ (ເອກະສານຄັດຕິດ 7)
8. ລະບຽບສຳລັບການດຳເນີນ ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019 (ເອກະສານຄັດຕິດ 8)
9. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ (ເອກະສານຄັດຕິດ 9)
10. ຄຳແນະນຳກ່ຽວກັບການລົງຄະແນນສຽງ (ເອກະສານຄັດຕິດ 10)
11. ແຜນທີ່ສະຖານທີ່ປະຊຸມ (ເອກະສານຄັດຕິດ 11)

❖ ໝາຍເຫດ:

1. ຜູ້ຖືຮຸ້ນແຕ່ລະທ່ານຈະຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ຢູ່ຕະຫຼາດຫຼັກຊັບ ລາວ ຊັ້ນ 4, ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ຖະໜົນ T4, ບ້ານ ໂພນທັນເໜືອ, ເມືອງໄຊ ເສດຖາ, ນະຄອນຫຼວງວຽງຈັນ, ໂທ (856-21) 454 361-4 ແຟັກ: (856-21) 454 360 ຫຼື ຕິດຕໍ່ ໂດຍກົງກັບ ນາງ ອານຸສອນ ອຸ້ຍພິລາວົງ ໃນໂມງລັດຖະການ.
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງ ແລະ ຜູ້ຕາງໜ້າກະລຸນານຳບັດປະຈຳຕົວ ຫຼື ສຳມະໂນ ຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເວລາລົງທະບຽນເຂົ້າ ຮ່ວມກອງປະຊຸມ. ລາຍລະອຽດເອກະສານຕ່າງໆ ທີ່ຕ້ອງນຳມາສະແດງໃນເວລາເຂົ້າຮ່ວມກອງປະຊຸມ ໄດ້ ລະບຸໄວ້ໃນ ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງ ປະຊຸມ ທີ່ຄັດຕິດມາພ້ອມນີ້.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າມາຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ ມູນພ້ອມລົງລາຍເຊັນໃນໃບມອບສິດຕາມເອກະສານທີ່ໄດ້ຂັດຕິດມາພ້ອມນີ້ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

❖ ຜູ້ປະສານງານຝ່າຍ ທຄຕລ

1) ທ່ານນາງ ພອນດາສຸກ ວົງພະຈັນ, ໂທ: 020 222 33683
2) ທ່ານນາງ ເກດແກ້ວ ສີລິວົງ, ໂທ: 020 222 82244

ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019

29 ພຶດສະພາ 2019

ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2018 (ເອກະສານຄັດຕິດ 2)

ກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2018 ໄດ້ຈັດຂຶ້ນໃນວັນທີ 26 ເມສາ 2019 ຢູ່ທີ່ໂຮງແຮມແມ່ຂອງຣິເວີ ໄຊ, ນະຄອນຫຼວງວຽງຈັນ. ວາລະຂອງກອງປະຊຸມດັ່ງກ່າວລວມມີ 7 ວາລະ ທີ່ປະກອບດ້ວຍ 2 ວາລະເພື່ອລາຍງານ ແລະ 5 ວາລະ ເພື່ອຮັບຮອງ. ທຄຕລ ໄດ້ກະກຽມບົດບັນທຶກກອງປະຊຸມ ພ້ອມທັງໄດ້ເປີດເຜີຍຂໍ້ມູນຮຽບຮ້ອຍແລ້ວ.

(ກະລຸນາເບິ່ງບົດບັນທຶກກອງປະຊຸມຄັ້ງຜ່ານມາ)

ວາລະທີ 2: ລາຍງານໂດຍຫຍໍ້ ກ່ຽວກັບ ສະພາບການດຳເນີນງານຂອງ ທຄຕລ ໃນປີ 2019 (ເອກະສານຄັດຕິດ 3)

- ໄດ້ຈັດກອງປະຊຸມສະພາບໍລິຫານທັງໝົດຈຳນວນ 7 ຄັ້ງ ເຊິ່ງປະກອບດ້ວຍກອງປະຊຸມສະໄໝສາມັນ 4 ຄັ້ງ ແລະ ສະໄໝວິສາມັນ 3 ຄັ້ງ; ບັນດາ 5 ຄະນະກຳມະການຂັ້ນສະພາບໍລິຫານ ກໍ່ໄດ້ຈັດກອງປະຊຸມຂອງຕົນຢ່າງເປັນປົກກະຕິ;
- ໄດ້ຈັດກອງປະຊຸມທົບທວນຜົນດຳເນີນທຸລະກິດໃນແຕ່ລະໄຕຣມາດ;
- ສຳເລັດການຈຳໜ່າຍຮຸ້ນລັດຖະບານ 10% ໃຫ້ຜູ້ຖືຮຸ້ນເດີມ ແລະ ມວນຊົນຜ່ານຕະຫຼາດຫຼັກຊັບລາວ. ປະຈຸບັນໂຄງສ້າງຜູ້ຖືຮຸ້ນ ຂອງ ທຄຕລ ແມ່ນ: ກະຊວງການເງິນ ຖືຮຸ້ນ 60%; ຄູ່ຖືຮຸ້ນຍຸດທະສາດ (COFIBRED) 10%; ນັກລົງທຶນພາຍໃນ ແລະ ຕ່າງປະເທດ 30% (ບຸກຄົນ ແລະ ສະຖາບັນແຕ່ລະລາຍຖືໄດ້ບໍ່ເກີນ 2%).
- ໄດ້ແຕ່ງຕັ້ງຮອງຜູ້ອຳນວຍການເພີ່ມອີກ 1 ທ່ານ; ອະນຸມັດການລາອອກຂອງຮອງຜູ້ອຳນວຍການ 1 ທ່ານ ຍ້ອນເຫດຜົນທາງສຸຂະພາບ ແລະ ອະນຸມັດການຍົກຍ້າຍຮອງຜູ້ອຳນວຍການ 1 ທ່ານ ເພື່ອໄປຮັບໜ້າທີ່ໃໝ່ຢູ່ທະນາຄານແຫ່ງ ສປປ ລາວ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ. ປະຈຸບັນຄະນະອຳນວຍການຂອງ ທຄຕລ ມີທັງໝົດ 6 ທ່ານ ປະກອບດ້ວຍ: ຜູ້ອຳນວຍການໃຫຍ່ 1 ທ່ານ ແລະ ຮອງຜູ້ອຳນວຍການ 5 ທ່ານ;
- ສຳເລັດການແຍກພະແນກຄຸ້ມຄອງສິນເຊື່ອອອກເປັນ 3 ພະແນກຄື: ພະແນກປະຕິບັດການສິນເຊື່ອ, ພະແນກຂາຍຜະລິດຕະພັນສິນເຊື່ອ, ພະແນກບໍລິຫານສິນເຊື່ອ ແລະ ສ້າງຕັ້ງພະແນກນິຕິກຳ;
- ໄດ້ເຂົ້າເປັນສະມາຊິກໂດຍກົງຂອງ AMEX; ອອກຜະລິດຕະພັນໃໝ່ BCEL MasterCard;
- ໄດ້ຮ່ວມມືກັບ Swift Pass ໃນການບໍລິການຊຳລະເງິນດ້ວຍ WeChat ແລະ AliPay; ຮ່ວມມືກັບຢູນຽນເພສາກົນ UPI ໃນການໃຫ້ບໍລິການຊຳລະສະສາງຜ່ານ QR CODE UnionPay;

- ພັດທະນາຜະລິດຕະພັນ BCEL One ເພື່ອໃຫ້ລູກຄ້າຂໍອອກບັດ Mastercard Prepaid ແລະ ພັດທະນາລະບົບຖອນເງິນສົດໂດຍບໍ່ໄດ້ນຳໃຊ້ບັດ (QR Cardless Withdrawal) ຢູ່ຕູ້ເອທີເອັມ; ພັດທະນາໂຄງການ Smart VAT Phase II ແລະ ເຊື່ອມລະບົບ ບ 53 ການຊຳລະຄ່າທຳນຽມນຳເຂົ້າລົດຊື່ວຄາວຄົນຕ່າງປະເທດ ຂອງກົມພາສີໃຫ້ມາຊຳລະຢູ່ຕູ້ບໍລິການອັດຕະໂນມັດ ທີ່ຂົວມິດຕະພາບລາວໄທ 1;
- ເຊັນສັນຍາ Bill payment ກັບສະຖາບັນການເງິນ ແລະ ບໍລິສັດຕ່າງໆ 8 ພາກສ່ວນ;
- ໄດ້ສຳເລັດການຮ່ວມທຶນສ້າງຕັ້ງ ບໍລິສັດ ລາວເນເຊີນນັເພເມັ້ນເນັດເວີກ ຈຳກັດ (LAPNET) ພາຍໃຕ້ການລົງທຶນຮ່ວມກັບ ທຫລ ຮ່ວມກັບອີກ 6 ທະນາຄານໃນລາວ ແລະ ບໍລິສັດ ຢູນຽນເພ ສາກົນ;
- ໄດ້ເຊັນສັນຍາຍົກລະດັບລະບົບ Core Banking ໃໝ່ ຮ່ວມກັບ ບໍລິສັດ ໄຮຊັນ ເຕັກໂນໂລຊີ ໂຮລດິງ ຈຳກັດ ເພື່ອຮອງຮັບການຂະຫຍາຍຕົວດ້ານວຽກງານບໍລິການໃນອະນາຄົດ ທຄຕລ;
- ໄດ້ເປີດບໍລິການໃນວັນເສົາ - ອາທິດ ໂດຍເນັ້ນໃສ່ໜ່ວຍບໍລິການທີ່ມີບໍລິມາດການບໍລິການຫຼາຍ ໃນເບື້ອງຕົ້ນໄດ້ເປີດຈຳນວນ 5 ໜ່ວຍບໍລິການ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າ;
- ໄດ້ຮັບລາງວັນ ICT AWARD 2019 ຮອງຊະນະເລີດລະດັບພາຍໃນປະເທດ ແລະ ລາງວັນຊະນະເລີດລະດັບອາຊຽນ ຈາກການນຳສະເໜີຜະລິດຕະພັນ BCEL Road Tax;

ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາຜົນການດຳເນີນທຸລະກິດປະຈຳປີ 2019 (ເອກະສານຄັດຕິດ 4)

ຜົນການດຳເນີນທຸລະກິດປະຈຳປີ 2019 ຕາມບັນຊີມາດຖານສາກົນສະເພາະກິດຈະການ ທີ່ໄດ້ຮັບການກວດສອບຈາກ ບໍລິສັດເອີນແອນຢັງລາວຈຳກັດ ແລະ ຮັບຮອງຈາກສະພາບໍລິຫານ ທຄຕລ ເຊິ່ງມີ:

- ຍອດຊັບສິນ/ໜີ້ສິນ: 46.547.208 ລ້ານກີບ, ທຽບໃສ່ແຜນການປີ 2019 ປະຕິບັດໄດ້ 108,9%
- ຍອດສິນເຊື່ອທັງໝົດ: 26.987.990 ລ້ານກີບ, ທຽບໃສ່ແຜນການປີ 2019 ປະຕິບັດໄດ້ 104,5%
- ຍອດເງິນຝາກທັງໝົດ: 40.004.656 ລ້ານກີບ, ທຽບໃສ່ແຜນການປີ 2019 ປະຕິບັດໄດ້ 112%
- ກຳໄລກ່ອນອາກອນ: 430.486 ລ້ານກີບ, ທຽບໃສ່ແຜນການປີ 2019 ປະຕິບັດໄດ້ 76,2%
- ກຳໄລຫຼັງອາກອນ: 329.482 ລ້ານກີບ, ທຽບໃສ່ແຜນການປີ 2019 ປະຕິບັດໄດ້ 75,5%

ສຳລັບຜົນການດຳເນີນທຸລະກິດປະຈຳປີ 2019 ຕາມບັນຊີມາດຖານສາກົນແບບສັງລວມກິດຈະການ ສະເໜີກອງປະຊຸມເພື່ອມອບສິດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງພາຍຫຼັງສຳເລັດການກວດສອບ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງເງິນປັນຜົນປະຈຳປີ 2019

ສະເໜີຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນຈຳນວນທັງໝົດ: 168.87 ລ້ານກີບ ຈຳນວນເງິນດັ່ງກ່າວແມ່ນໄດ້ຫັກອາກອນກຳໄລໃນທຸລະກິດ, ສ້າງຄັງຕ່າງໆຕາມລະບຽບການແລ້ວ ແລະ ການຈ່າຍເງິນປັນຜົນເທົ່າກັບ **813 ກີບ/ຮຸ້ນ**.

ການຈ່າຍເງິນປັນຜົນຈະໄດ້ປະຕິບັດໃຫ້ສຳເລັດຢູ່ພາຍໃນ 10 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2020 (ເອກະສານຄັດຕິດ 5)

ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາແຜນການ ປະຈຳປີ 2020 ທຽບໃສ່ປີ 2019 ມາດຖານ ສາກົນ ສະເພາະກິດຈະການ ມີດັ່ງນີ້:

- ຍອດຊັບສິນ ເພີ້ມຂຶ້ນ: 7,0%,
- ຍອດເງິນຝາກ ເພີ້ມຂຶ້ນ: 7,7%
- ຍອດເງິນກູ້ທັງໝົດ ເພີ້ມຂຶ້ນ: 5,2%,
- ກຳໄລກ່ອນອາກອນ: 357 ຕື້ກີບ ຫຼຸດລົງ 17,1 %.
- ແຜນຮັບພະນັກງານໃໝ່ ປະກອບໃຫ້ ທຄຕລ ທົ່ວລະບົບ ຈຳນວນ 166 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການເພີ້ມຂຶ້ນ 12 ໜ່ວຍບໍລິການ ໃນທົ່ວປະເທດ
- ແຜນການນຳໃຊ້ທຶນເພື່ອປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງທັງໝົດ: 360,79 ຕື້ກີບ ແລະ ແຜນຄາດວ່າຈະໂອນເປັນຊັບສິນບັດຄົງທີ່ ເປັນຈຳນວນເງິນທັງໝົດ: 312,44 ຕື້ກີບ.

ໃນກໍລະນີທີ່ມີການປ່ຽນແປງໃດໆໃນອະນາຄົດ ສະເໜີມອບສິດໃຫ້ສະພາບໍລິຫານ ເພື່ອປັບປຸງແຜນການປະຈຳ ປີ 2020 ຕາມຄວາມເໝາະສົມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະ ປະຈຳປີ 2020.

ອີງຕາມການຄົ້ນຄວ້າ, ສົມທຽບເງື່ອນໄຂຕ່າງໆ ແລະ ລາຄາ, ທຄຕລ ໄດ້ເລືອກເອົາບໍລິສັດ PWC ເປັນຜູ້ກວດ ສອບຖານະການເງິນ ທຄຕລ ປະຈຳປີ 2020, ລາຄາກວດສອບ ແລະ ທົບທວນຂອບເຂດເງິນກູ້ ແມ່ນ 123.750 USD ເຊິ່ງເພີ້ມຂຶ້ນເມື່ອທຽບກັບປີ 2016 – 2019 ທີ່ຄ່າກວດສອບແມ່ນ 93.000 USD ໂດຍແມ່ນບໍລິສັດເອີນສ໌ ແອນຢັງລາວ ຈຳກັດ ເປັນຜູ້ກວດສອບ. ແລະຄົບກຳນົດທີ່ຕ້ອງປ່ຽນຜູ້ກວດສອບໃໝ່. ການບໍລິການກວດສອບລວມມີ ການກວດສອບຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວພາສາອັງກິດ, ທົບທວນຖານະການເງິນປະຈຳ 6 ເດືອນ ແລະ ປະຈຳປີ.

ວາລະທີ 7: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະພາບໍລິຫານຊຸດໃໝ່ (ເອກະສານຄັດຕິດ 6)

ສະພາບໍລິຫານ ທຄຕລ ຊຸດປະຈຸບັນ ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2017 ທີ່ຈັດຂຶ້ນໃນ ວັນທີ 27 ເມສາ 2018. ໂດຍອີງຕາມຂໍ້ຕົກລົງຂອງ ຄຄຊ ແລະ ກົດລະບຽບຂອງ ທຄຕລ, ສະພາບໍລິຫານ ທຄຕລ ມີ

ອາຍຸການ 2 ປີ ນັບແຕ່ມື້ຖືກແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນເປັນຕົ້ນໄປ, ໝາຍຄວາມວ່າອາຍຸການເຮັດວຽກຂອງສະພາບໍລິຫານຊຸດປະຈຸບັນ ຈະສິ້ນສຸດລົງຫຼັງກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ນີ້.

ເພື່ອຮັບປະກັນໃຫ້ການດຳເນີນງານຂອງສະພາບໍລິຫານມີຄວາມຕໍ່ເນື່ອງ ສະພາບໍລິຫານ ຈຶ່ງໄດ້ມີມະຕິຮັບຮອງໃຫ້ສະເໜີຄະນະສະພາບໍລິຫານ ທຄຕລ ຊຸດປະຈຸບັນ ເພື່ອບັນຈຸເປັນສະພາບໍລິຫານ ທຄຕລ ຊຸດໃໝ່ ດັ່ງມີລາຍຊື່ລຸ່ມນີ້:

1. ທ່ານ ປອ. ບຸນເຫຼືອ ສີນໄຊວໍຣະວົງ, ຮອງລັດຖະມົນຕີກະຊວງການເງິນ
2. ທ່ານ ຄຳສຸກ ສູນດາລາ ບຸກຄົນອິດສະຫຼະ
3. ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ
4. ທ່ານ ພຸດທະຂັນ ຂັນຕີ, ຮອງຫົວໜ້າຄັງເງິນແຫ່ງຊາດ
5. ທ່ານ ຮສ.ປອ ພູເພັດ ກ້ຽວພິລາວົງ ຮອງຄະນະບໍດິຄະນະເສດຖະສາດແລະບໍລິຫານທຸລະກິດ, ມ.ຊ
6. ທ່ານ ວຽງສຸກ ຈຸນທະວົງ, ຮອງຜູ້ອຳນວຍການໃຫຍ່ ທຄຕລ
7. ທ່ານ Stephane Mangiavacca ຕາງໜ້າຄູ່ຮ່ວມຍຸດທະສາດ (COFIBRED)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 11 /ສພບ

ນະຄອນຫຼວງວຽງຈັນ, ວັນທີ: 26/04/2019

ບົດບັນທຶກ
ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2018.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 (ຕໍ່ໄປນີ້ຮຽກว่า: "ກອງປະຊຸມ") ຂຶ້ນໃນເວລາ 14:30 ໂມງ ຂອງວັນທີ 26 ເມສາ 2019 ທີ່ຫ້ອງປະຊຸມ Grand Ballroom ໂຮງແຮມແລນມາກແມ່ຂອງຣິເວີໄຊ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 87 ທ່ານ, ຜູ້ມອບສິດຈຳນວນ 193 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 179.490.932 ຮຸ້ນ, ນັບທັງ 1.060.332 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 86,409% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 28.232.368 ຮຸ້ນ ເທົ່າກັບ 13,591% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ກ່ອນດຳເນີນແຕ່ລະວາລະ, ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບ ກ່ຽວກັບ ບັນດາສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ, ລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ.

ຈາກນັ້ນ, ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະ ດັ່ງນີ້:

ວາລະທີ 1: ລາຍງານການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ.

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານໃຫ້ກອງປະຊຸມຮັບຊາບ ກ່ຽວກັບ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ຖືຮຸ້ນຄັ້ງວັນທີ 27/04/2018.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມໃດໆ.

ວາລະນີ້ ບໍ່ມີການລົງຄະແນນສຽງ.

ວາລະທີ 2: ລາຍງານຫຍໍ້ການເຄື່ອນໄຫວດຳເນີນງານຂອງ ທຄຕລ ປະຈຳປີ 2018.

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານໃຫ້ກອງປະຊຸມຮັບຊາບ ກ່ຽວກັບ ການເຄື່ອນໄຫວດຳເນີນງານຂອງ ທຄຕລ ປະຈຳປີ 2018.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມໃດໆ.

ວາລະນີ້ ບໍ່ມີການລົງຄະແນນສຽງ.

ວາລະທີ 3: ພິຈາລະນາຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2018:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ແຈ້ງຜົນການດຳເນີນທຸລະກິດປະຈຳປີ 2018 ຕາມມາດຖານສາກົນສະເພາະກິດຈະການ ທີ່ໄດ້ຮັບການກວດສອບຈາກ ບໍລິສັດເອີນແອນຢັງລາວຈຳກັດ ດັ່ງນີ້:

- ຍອດຊັບສິນ/ໜີ້ສິນ: 38.942.645 ລ້ານກີບ;
- ຍອດສິນເຊື່ອທັງໝົດ: 24.338.369 ລ້ານກີບ;
- ຍອດເງິນຝາກທັງໝົດ: 32.968.912 ລ້ານກີບ;
- ກຳໄລກ່ອນອາກອນ: 459.256 ລ້ານກີບ;
- ກຳໄລຫຼັງອາກອນ: 353.656 ລ້ານກີບ,
- ສະເໜີກອງປະຊຸມມອບສິດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2018 ຕາມມາດຖານສາກົນແບບສັງລວມກິດຈະການ ຫຼັງສຳເລັດການກວດສອບ.

ລຳດັບຕໍ່ມາປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ເຊິ່ງມີຄຳຖາມ ແລະ ການຊີ້ແຈງ ດັ່ງນີ້:

1) **ທ່ານ ໄກອັນ ກາດວານິດ** ໄດ້ມີຄຳເຫັນວ່າ: ກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ ໃນ 2-3 ປີຜ່ານມານີ້ ບໍ່ມີການຮັບຮອງບົດບັນທຶກກອງປະຊຸມ, ຄວນສະເໜີຮັບຮອງບົດບັນທຶກກອງປະຊຸມຄັ້ງຜ່ານມາ ເພື່ອໃຫ້ຜູ້ຖືຮຸ້ນສາມາດກວດສອບບົດບັນທຶກກອງປະຊຸມວ່າຖືກຕ້ອງບໍ່. ທຄຕລ ບໍ່ມີການແນບບົດບັນທຶກມາກັບເອກະສານກອງປະຊຸມ ແລະ ບໍ່ຮູ້ບ່ອນທີ່ຈະໂຫຼດເອົາ ຕ້ອງໄດ້ສອບຖາມເອົາ, ໃນເວບໄຊທີ່ສາມາດໂຫຼດໄດ້ເຫັນມີແຕ່ບົດບັນທຶກກອງປະຊຸມສະພາບໍລິຫານ.
   - **ທ່ານ ພູຂົງ ຈັນທະຈັກ** ໄດ້ຊີ້ແຈງວ່າ: ທຄຕລ ມີພາກສ່ວນທີ່ຮັບຜິດຊອບເກັບຮັກສາບົດບັນທຶກກອງປະຊຸມ. ນອກຈາກນີ້, ບົດບັນທຶກກອງປະຊຸມ ກໍ່ໄດ້ເປີດເຜີຍລົງໃນລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ ຊຶ່ງຜູ້ຖືຮຸ້ນທີ່ຕ້ອງການກວດສອບເນື້ອໃນບົດບັນທຶກກອງປະຊຸມ ສາມາດກວດເບິ່ງໄດ້ໃນເວບໄຊ ຫຼື ສາມາດປະສານຫາກອງເລຂາ ໄດ້ຕື່ມ.
2) **ທ່ານ ສຸລິຍະກອນ ອິນທະວົງ**: ມີຄຳຖາມກ່ຽວກັບບົດລາຍງານການເງິນປີ 2018, ບົດລາຍງານການເງິນ ໄຕມາດ 4/2018 ເປີດເຜີຍຊ້າ ຍ້ອນເຫດຜົນໃດ? ແລະ ໃນປີ 2019 ຈະມີວິທີການໃດ ເພື່ອໃຫ້ການເປີດເຜີຍຖານະການເງິນໄວຂຶ້ນ?
   - **ທ່ານ ພູຂົງ ຈັນທະຈັກ** ໄດ້ຊີ້ແຈງວ່າ: ການເປີດເຜີຍຂໍ້ມູນ ທຄຕລ ປະຕິບັດຕາມລະບຽບການທີ່ກຳນົດ, ໄຕມາດ 4/2018 ແມ່ນໄດ້ມີການກວດສອບ ແລະ ຮັບຮອງຈາກສະພາບໍລິຫານ ຢ່າງຖືກຕ້ອງຖີ່ຖ້ວນຈຶ່ງສາມາດເປີດເຜີຍ, ມີຄວາມຊັກຊ້າແຕ່ຍັງນອນຢູ່ໃນຂອບເຂດຕາມລະບຽບການ.

ຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ: 179.490.932 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ: ...0... ສຽງ, ເທົ່າກັບ ..0... % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4: ພິຈາລະນາຮັບຮອງເງິນປັນຜົນປະຈຳປີ 2018:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ສະເໜີຕໍ່ກອງປະຊຸມວ່າ ຫຼັງຈາກຫັກລາຍຈ່າຍອາກອນ ແລະ ສ້າງຄັງຕ່າງໆຕາມລະບຽບການແລ້ວ, ເຫັນດີຈ່າຍເງິນປັນຜົນຈຳນວນທັງໝົດ: **205.853 ລ້ານກີບ**ໃຫ້ຜູ້ຖືຮຸ້ນ ທຄຕລ ທີ່ມີລາຍຊື່ໃນປື້ມບັນຊີຜູ້ຖືຮຸ້ນ ໃນມື້ປິດປື້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ ແລະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ໃນວັນທີ 01 ເມສາ 2019, ໃນອັດຕາ **991 ກີບ/ຮຸ້ນ.** ການຈ່າຍເງິນປັນຜົນໃຫ້ສຳເລັດ ພາຍໃນ 10 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.

ລຳດັບຕໍ່ມາປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມໃດໆ.

ຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ: 179.490.932 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ: ...0... ສຽງ, ເທົ່າກັບ ..0... % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 5: ພິຈາລະນາຮັບຮອງແຜນການປີ 2019:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ສະເໜີຕໍ່ກອງປະຊຸມ ກ່ຽວກັບ ແຜນການປະຈຳປີ 2019 ດັ່ງນີ້:

- ຍອດຊັບສິນ: 42.742.300 ລ້ານກີບ
- ຍອດເງິນຝາກ: 35.730.000 ລ້ານກີບ
- ຍອດເງິນກູ້: 25.830.000 ລ້ານກີບ
- ກຳໄລກ່ອນອາກອນ: 565.000 ລ້ານກີບ
- ແຜນຮັບພະນັກງານໃໝ່ ປະກອບໃຫ້ ທຄຕລ ທົ່ວລະບົບ ຈຳນວນ 200 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການເພີ່ມຂຶ້ນ 10 ໜ່ວຍບໍລິການ ໃນທົ່ວປະເທດ
- ແຜນການນຳໃຊ້ທຶນເພື່ອປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທີ່ຄາດว่าຈະໂອນເປັນຊັບສິນບັດຄົງທີ່ ເປັນຈຳນວນເງິນທັງໝົດ: 172.153 ລ້ານກີບ.

ລຳດັບຕໍ່ມາປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ເຊິ່ງມີຄຳຖາມ ແລະ ການຊີ້ແຈງ ດັ່ງນີ້:

1) **ທ່ານ ໄກອັນ ກາດອານິດ**: ເອກະສານປະກອບວາລະທີ 5 ມີເນື້ອໃນເວົ້າເຖິງການພັດທະນາບຸກຄະລາກອນ ແລະ CG ຢາກຮູ້ວ່າເປັນການເລີ່ມເຮັດປີທຳອິດ ຫຼື ເຮັດມາກ່ອນແລ້ວ?
   - ແຜນການດຳເນີນງານ 2019 ມີຜະລິດຕະພັນ ໃໝ່ກ່ຽວກັບບັດ Mastercard, ຜ່ານມາ ທຄຕລ ກໍ່ມີຜະລິດຕະພັນບັດຫຼາຍອັນເຊັ່ນ: JCB, Co-Brand ຄວນມີການໂຄສະນາ ແລະ ອັບເດດເວບໄຊ ໃນການໂຄສະນາຕື່ມ ເພາະລູກຄ້າທີ່ຕ້ອງການເຂົ້າຫາທະນາຄານຈະເບິ່ງຂໍ້ມູນຈາກເວບໄຊ.
   - ກ່ຽວກັບຜະລິດຕະພັນພື້ນຖານທີ່ປະຊາຊົນໃຊ້ຫຼາຍຄື ATM ທຳມະດາ, ທະນາຄານມີແຜນທີ່ຈະປ່ຽນເປັນບັດ Chip ເພື່ອໃຫ້ນຳໃຊ້ໄດ້ຢ່າງສາກົນໃນເວລາໃດ?

- ທຄຕລ ມີການພັດທະນາຢ່າງຕໍ່ເນື່ອງ ແຕ່ອາດຈະເນັ້ນໜັກໃນປີ 2019 ໃນການພັດທະນາບຸກຄະລາກອນ ແລະ CG. ຖ້າມີການປ່ຽນແປງໃດທີ່ຈະເປັນຜົນກະທົບຕໍ່ລູກຄ້າຕ້ອງມີການແຈ້ງໃຫ້ລູກຄ້າຊາບລ່ວງໜ້າໃນໄລຍະເວລາທີ່ພຽງພໍໃຫ້ຄົບທຸກຜະລິດຕະພັນ ຊຶ່ງເປັນເລື່ອງພື້ນຖານທີ່ຕ້ອງປະຕິບັດໃຫ້ໄດ້. ແຕ່ເຫັນວ່າຍັງມີບາງອັນທີ່ເຮັດບໍ່ທັນໄດ້ເຊັ່ນ: ການປັບປຸງປຶ້ມເງິນຝາກທີ່ພິມຂ້າມລາຍການ ຄວນພິມທັງໝົດ ເພາະຖ້າມີຫຼາຍລາຍການກໍ່ໝາຍເຖິງລູກຄ້າມີທຸລະກຳກັບທະນາຄານຫຼາຍ.
- ບັດເກົ່າທີ່ໄປປ່ຽນບັດໃໝ່ ທະນາຄານບໍ່ຄວນເກັບບັດຂອງລູກຄ້າໄວ້ ເພາະອາດຈະເປັນການເຮັດໃຫ້ລູກຄ້າລະແວງເຖິງຄວາມປອດໄພ.
  - **ທ່ານ ພູຂົງ ຈັນທະຈັກ** ໄດ້ສະແດງຄວາມຂອບໃຈຕໍ່ກັບການສົ່ງຂ່າວດ້ານບໍລິການ ແລະ ໄດ້ຊີ້ແຈງວ່າ: ກ່ຽວກັບ ການພັດທະນາ, ແຜນຍຸດທະສາດແມ່ນໄດ້ຂຶ້ນແຜນແຕ່ລະວຽກງານ ແລະ ກະກຽມທຶນໃນການພັດທະນາແຕ່ລະດ້ານ. ການພັດທະນາບຸກຄະລາກອນ ກໍ່ມີການຈັດສຳມະນາທັງພາຍໃນ ແລະ ຕ່າງປະເທດ, ລວມທັງການພັດທະນາ CG ແລະ ອື່ນໆ ເຊິ່ງໄລຍະນີ້ກໍ່ຍັງມີໂຄງການບາເຊອ 2 ເພື່ອໃຫ້ ທຄຕລ ມີຄວາມເຂັ້ມແຂງ ຕາມນະ�โยบายທີ່ທະນາຄານແຫ່ງ ສປປ ລາວ ວາງອອກ. ການພັດທະນາດັ່ງກ່າວ ທຄຕລ ໄດ້ດຳເນີນມາໃນແຕ່ລະປີຢ່າງຕໍ່ເນື່ອງ.
  - ດ້ານທຸລະກິດ ມີແຜນທຸລະກິດ, ແຜນລາຍຮັບລາຍຈ່າຍໃນການດຳເນີນງານແຕ່ລະດ້ານ. ສຳລັບການໂຄສະນາຫຼັງມີຜະລິດຕະພັນໃໝ່ ທຄຕລ ກໍ່ໄດ້ເອົາໃຈໃສ່ໃນການລົງໂຄສະນາຜ່ານສື່ຕ່າງໆ ແລະ ຜ່ານເວບໄຊ ຖ້າຍັງບໍ່ມີການອັບເດດກໍ່ຈະປັບປຸງຕື່ມ.
  - ການພັດທະນາບັດ ATM ເປັນແບບ Chip ແມ່ນກຳລັງດຳເນີນການຢູ່ ແຕ່ຍັງບໍ່ທັນສຳເລັດ ຊຶ່ງຈະສືບຕໍ່ໃຫ້ສຳເລັດ.

2) **ທ່ານ ແກ້ວຕາດຳ ມະໂນລົມ**: ປີຜ່ານມາ ທຄຕລ ເປີດໜ່ວຍບໍລິການ ຮັບພະນັກງານ 90 ຄົນ, ປີ 2019 ຈະເປີດໜ່ວຍບໍລິການເພີ່ມ 10 ໜ່ວຍ ແລະ ຮັບພະນັກງານ 200 ກว่า ຄົນ, ມີຄວາມຈຳເປັນແນວໃດບໍ່ ເພາະອາດເພີ່ມລາຍຈ່າຍບໍລິຫານ?
   - **ທ່ານ ພູຂົງ ຈັນທະຈັກ** ໄດ້ຊີ້ແຈງວ່າ: ການຂະຫຍາຍຕາໜ່າງບໍລິການມີຄວາມຈຳເປັນ ແລະ ສຳຄັນ. ກ່ອນ ທຄຕລ ຈະຂະຫຍາຍຕາໜ່າງບໍລິການ ແມ່ນຈະມີການສຳຫຼວດຄັກແນ່ ເພື່ອເປັນການບໍລິການຕາມຄວາມຮຽກຮ້ອງຕ້ອງການສັງຄົມ ແລະ ດຳເນີນງານຢ່າງມີປະສິດທິຜົນ. ປີ 2018 ທຄຕລ ຂຶ້ນແຜນເປີດ 9 ໜ່ວຍບໍລິການແຕ່ເປີດຕົວຈິງ 8 ໜ່ວຍ, ປີ 2018 ຂຶ້ນແຜນພະນັກງານ 217 ຄົນ, ປີ 2017 ຂຶ້ນແຜນ 90 ຄົນ; ການປະກອບພະນັກງານແຕ່ລະຈຸດ ແມ່ນຕາມໜ້າວຽກຕົວຈິງ ແລະ ນອນໃນແຜນການທີ່ຂຶ້ນໄວ້ ຊຶ່ງໂດຍລວມເຫັນວ່າຈຳນວນລູກຄ້າ ແລະ ປະລິມານທຸລະກຳຢູ່ແຕ່ລະໜ່ວຍບໍລິການ ກໍ່ເພີ່ມຂຶ້ນ ຈຶ່ງຈຳເປັນຕ້ອງປະກອບພະນັກງານຢ່າງເໝາະສົມພຽງພໍ. ນອກຈາກນີ້ ທຄຕລ ກໍ່ຍັງໄດ້ມີແຜນໃນການພັດທະນາຜະລິດຕະພັນ ແລະ ລະບົບໄອທີ ເພື່ອຮອງຮັບການບໍລິການຂອງລູກຄ້າຕື່ມອີກ ຊຶ່ງເຫັນວ່າຕົວເລກທີ່ຂຶ້ນແຜນມານີ້ມີຄວາມເໝາະສົມແລ້ວ.

ຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ: 179.490.932 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ: ...0... ສຽງ, ເທົ່າກັບ ..0... % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 6: ພິຈາລະນາຮັບຮອງການແຕ່ງຕັ້ງຜູ້ກວດສອບອິດສະຫຼະ ປະຈຳປີ 2019.

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ສະເໜີຕໍ່ກອງປະຊຸມ ເພື່ອພິຈາລະນາຮັບຮອງເອົາ ບໍລິສັດເອີນແອນຢັງລາວ ຈຳກັດ ເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈຳປີ 2019, ລາຄາກວດສອບ 93.000 ໂດລາ (ເກົ້າສິບສາມພັນໂດລາສະຫະລັດຖ້ວນ) ພາຍໃຕ້ເງື່ອນໄຂທີ່ບໍລິສັດເອີນແອນຢັງລາວ ຈຳກັດ ຕ້ອງປ່ຽນຜູ້ຮຸ້ນສ່ວນຮັບຜິດຊອບ (Partner) ໃນການລົງລາຍເຊັນໃນບົດລາຍງານການເງິນ ແລະ ຜູ້ຮຸ້ນສ່ວນຮັບຜິດຊອບ (Partner) ໃໝ່ ຂອງບໍລິສັດເອີນແອນຢັງລາວ ຈຳກັດ ສາມາດດຳເນີນການກວດສອບບັນຊີໃຫ້ ທຄຕລ ໄດ້ສູງສຸດບໍ່ເກີນ 5 ປີ (ຮອດປີ 2020).

ລຳດັບຕໍ່ມາປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ເຊິ່ງບໍ່ມີຄຳຖາມໃດໆ.

ຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ: 179.490.932 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ: ...0... ສຽງ, ເທົ່າກັບ ..0... % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 7: ພິຈາລະນາຮັບຮອງການລົງທຶນຂອງ ທຄຕລ ໃນການຮ່ວມສ້າງຕັ້ງບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ (Lao National Payment Network Co., LTD)

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ສະເໜີກອງປະຊຸມ ເພື່ອພິຈາລະນາຮັບຮອງໃຫ້ ທຄຕລ ຮ່ວມລົງທຶນສ້າງຕັ້ງບໍລິສັດ ລາວ ເນເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ ຊຶ່ງເປັນບໍລິສັດທີ່ໃຫ້ບໍລິການດ້ານລະບົບຊຳລະສາງແບບທັນສະໄໝໃຫ້ແກ່ບັນດາທະນາຄານພາຍໃນປະເທດ ໂດຍມີບັນດາທະນາຄານທຸລະກິດພາຍໃນປະເທດ ຈຳນວນ 7 ແຫ່ງ ແລະ ບໍລິສັດຈາກຕ່າງປະເທດ 1 ແຫ່ງ ຮ່ວມລົງທຶນສ້າງຕັ້ງ ຊຶ່ງມີທຶນຈົດທະບຽນທັງໝົດ 34.000 ລ້ານກີບ. ໃນນັ້ນ, ທຄຕລ ໄດ້ຮ່ວມລົງທຶນ 20% ຂອງຮຸ້ນທັງໝົດ ເປັນມູນຄ່າ 6.800 ລ້ານກີບ ແລະ ໄດ້ຮັບສິດໃນການແຕ່ງຕັ້ງ ຜູ້ອຳນວຍການບໍລິສັດ.

ລຳດັບຕໍ່ມາປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ເຊິ່ງມີຄຳຖາມ ແລະ ການຊີ້ແຈງ ດັ່ງນີ້:

1) **ທ່ານ ລິນລິ**, ບໍລິສັດຫຼັກຊັບລາວຈີນ: ພາຍຫຼັງສ້າງຕັ້ງບໍລິສັດດັ່ງກ່າວຈະເປັນສູນຊຳລະຂັ້ນ 2 ຂຶ້ນກັບສູນຊຳລະສະສາງຂອງ ທຫລ ບໍ່? ຜະລິດຕະພັນ OnePay ຂອງ ທຄຕລ ຈະເປັນສ່ວນໜຶ່ງຂອງບໍລິສັດນີ້ ຫຼື ຈະເປັນຊູ່ແຂ່ງທາງທຸລະກິດກັນ?
   - **ທ່ານ ພູຂົງ ຈັນທະຈັກ** ໄດ້ໃຫ້ຂໍ້ມູນວ່າ: ບໍລິສັດ ຈະເປັນນິຕິບຸກຄົນທີ່ຮັບຜິດຊອບລະບົບຊຳລະສະສາງລະຫວ່າງທະນາຄານພາຍໃນ ທັງລວມການເຊື່ອມໂຍງ ATM, ການຊຳລະສະສາງຜ່ານໂທລະສັບມືຖື ແລະ ການເຊື່ອມໂຍງຜ່ານເຄື່ອງຮູດບັດ ຊຶ່ງຈະສາມາດຫຼຸດຜ່ອນຕົ້ນທຶນຂອງບັນດາທະນາຄານສະມາຊິກ. ສ່ວນແຜນການເຊື່ອມໂຍງກັບລະບົບຊຳລະອື່ນເພີ່ມເຕີມນັ້ນ ກໍ່ຕ້ອງເບິ່ງການດຳງານຕົວຈິງຂອງບໍລິສັດ. ທຄຕລ ກໍ່ມີແຜນການເຊື່ອມໂຍງ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ຕົ້ນທຶນ.

ຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫຼາຍກວ່າ 80% ຂອງຮຸ້ນ ທຄຕລ ທັງໝົດ ດັ່ງນີ້:

- **ເຫັນດີຈຳນວນ: 87 ຄົນ, ເທົ່າກັບ 100% ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຈຳນວນ 179.490.932 ຮຸ້ນ, ເທົ່າກັບ 86,409% ຂອງຈຳນວນຮຸ້ນທັງໝົດ.**
- **ບໍ່ເຫັນດີຈຳນວນ: ...0... ຄົນ, ເທົ່າກັບ ...0...% ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຈຳນວນ ...0... ຮຸ້ນ, ເທົ່າກັບ ...0...% ຂອງຈຳນວນຮຸ້ນທັງໝົດ.**

ພາຍຫຼັງທີ່ກອງປະຊຸມໄດ້ດຳເນີນຄົບທຸກວາລະທີ່ໄດ້ກຳນົດໄວ້ໃນໜັງສືແຈ້ງເຊີນແລ້ວນັ້ນ, ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມ ຫຼື ຄຳເຫັນຕໍ່ບັນຫາອື່ນໆ, ເຊິ່ງໄດ້ມີຄຳຖາມ ແລະ ການຊີ້ແຈງດັ່ງນີ້:

1) **ທ່ານ ໄກວັນ ກາດວານິດ**: ປົກກະຕິລາຄາຮຸ້ນບໍລິສັດໃຫຍ່ບໍ່ໄດ້ບົ່ງບອກເຖິງການດຳເນີນກິດຈະການ ເວລາຜູ້ຊື້ຫຼາຍກໍ່ຈະຈະເຮັດໃຫ້ລາຄາຮຸ້ນສູງຂຶ້ນ ເວລາມີເງິນລົງທຶນຈາກຕ່າງປະເທດກໍ່ຈະເປັນຜົນດີຕໍ່ຄົນລາວ. ຄົນຕ່າງປະເທດສາມາດມາເປີດບັນຊີຢູ່ລາວໄດ້ ແຕ່ທະນາຄານປະຕິເສດໃນການອອກບັດ ATM ຫຼື ໃຊ້ BCEL One, ເຮັດໃຫ້ລູກຄ້າຄົນຕ່າງປະເທດບໍ່ສາມາດກວດສອບເງິນຂອງຕົນໄດ້ ເພາະບໍ່ໄດ້ມີໃບອະນຸຍາດເຮັດວຽກຢູ່ລາວ, ເຫັນວ່າ ຄວນມີການຄົ້ນຄວ້າບັນຫາດັ່ງກ່າວ, ເປັນຫຍັງ ທຄຕລ ຈຶ່ງປະຕິບັດຄືດັ່ງກ່າວ?
   - ບັດ Credit ທີ່ໝົດອາຍຸ ທຄຕລ ປ່ຽນບັດໃໝ່ໃຫ້ຟຣີ, ແຕ່ບັດ ATM ທຄຕລ ເກັບຄ່າທຳນຽມຄ່າອອກບັດ 50%. ລູກຄ້າທີ່ຈະສາມາດຮັກສາບັດໄດ້ເຖິງ 5 ປີ ກໍ່ເປັນເວລາຍາວສົມຄວນ, ຈະເປັນພາບພົດທີ່ດີ ຖ້າ ທຄຕລ ປ່ຽນບັດໃຫ້ໂດຍບໍ່ເກັບຄ່າທຳນຽມ.
   - ຂໍເສີມເລື່ອງບັດຂອງ ທຄຕລ, ການໂຄສະນາເຖິງລູກຄ້າຜ່ານມາ ທຄຕລ ເຮັດໄດ້ດີຂໍຍອມຮັບ ແຕ່ການໂຄສະນາທາງເວັບໄຊບໍ່ຫຼາຍບໍ່ມີການອັບເດດ, ເຊິ່ງລູກຄ້າຜູ້ທີ່ເຂົ້າມາເບິ່ງເວບໄຊແມ່ນຜູ້ທີ່ຕ້ອງການເຂົ້າມາຫາທະນາຄານ ຈຶ່ງຄວນເອົາໃຈໃສ່ຕື່ມ, ຍັງມີບາງຜະລິດຕະພັນທີ່ຂາດການໂຄສະນາເຊັ່ນ: ບັດ JCB;
      - **ທ່ານ ພູຂົງ ຈັນທະຈັກ** ໄດ້ຊີ້ແຈງວ່າ: ນັກລົງທຶນຕ່າງປະເທດທີ່ມາຊື້ຮຸ້ນ ຈະມີ 2 ກຸ່ມ: 1. ກຸ່ມທີ່ຂໍເປີດບັນຊີເງິນຝາກ ເຊິ່ງ ທຄຕລ ພິຈາລະນາໂດຍອີງໃສ່ລະບຽບ KYC ຂອງ ທຄຕລ. ຫາກລູກຄ້າມີບັນຊີເງິນຝາກປະຢັດ ແມ່ນສາມາດຂໍອອກບັດ ATM ຫຼື ບໍລິການອື່ນໆໄດ້. ສຳລັບແບບທີ່ 2. ແມ່ນການເປີດບັນຊີເງິນຝາກປະຢັດ ເພື່ອຊື້ຮຸ້ນ ແມ່ນປະຕິບັດຕາມລະບຽບຂອງຕະຫລາດຫຼັກຊັບ ແລະ ສຄຄຊ ເຊິ່ງເງື່ອນໄຂ ບັນຊີຮຸ້ນແມ່ນຈະມີຂໍ້ຈຳກັດ ບໍ່ຄືກັບບັນຊີເງິນຝາກປະຢັດທົ່ວໄປ. ສະເໜີໃຫ້ຜູ້ຖືຮຸ້ນ ສອບຖາມຂໍ້ມູນເພີ່ມເຕີມກັບພາກສ່ວນກ່ຽວຂ້ອງ (ບໍລິສັດຫຼັກຊັບ) ຕື່ມ.
      - ບັນຫາການເກັບຄ່າທຳນຽມ ແມ່ນ ທຄຕລ ມີລະບຽບປະຕິບັດເຊັ່ນນັ້ນ ໂດຍລວມກໍ່ເພື່ອເປັນການທົດແທນຕົ້ນທຶນຂອງບັດ. ສ່ວນວ່າ ທຄຕລ ຈະມີນະ�โยบายຍົກເວັ້ນແນວໃດນັ້ນ ຕ້ອງໄດ້ມີການພິຈາລະນາຄົ້ນຄວ້າເຖິງຄວາມເໝາະສົມກ່ອນ.
2) **ທ່ານ ແກ້ວຕາດຳ ມະໂນລົມ**: ໄດ້ສະເໜີວ່າການຊື້ຮຸ້ນຄວນມີໃບຢັ້ງຢືນເປັນລາຍລັກອັກສອນໄດ້ບໍ່?
   - ແຜນ ທຄຕລ ປີ 2019 ຈະມີກຳໄລກ່ອນອາກອນ 565 ຕື້ກີບ ຖ້າທຽບກັບຕົວເລກປີ 2018 ເຫັນວ່າ ກຳໄລເພີ່ມຂຶ້ນຢູ່ປະມານ 20% ກວ່າ, ປັດໃຈໃດທີ່ຈະເຮັດໃຫ້ບັນລຸແຜນດັ່ງກ່າວ?
      - **ທ່ານ ພູຂົງ ຈັນທະຈັກ:** ໄດ້ມີຄຳເຫັນວ່າ ກ່ຽວກັບ ການຊື້ຮຸ້ນ ແມ່ນມີການບັນທຶກຂໍ້ມູນຢ່າງລະອຽດດ້ວຍລະບົບຂອງຕະຫຼາດຫຼັກຊັບ ຊຶ່ງຖ້າຕ້ອງການຂໍ້ມູນ ກໍ່ສາມາດປະສານເອົາໄດ້.
      - ກ່ຽວກັບແຜນກຳໄລຂອງ ທຄຕລ, ແມ່ນອີງໃສ່ຜົນການດຳເນີນທຸລະກິດໄລຍະຜ່ານມາ ອີງໃສ່ແຜນການຂະຫຍາຍທຸລະກິດ, ແຜນລາຍຮັບຄ່າທຳນຽມ, ຄຸ້ມຄອງສິນເຊື່ອ ແລະ ຄຸ້ມຄອງລາຍຈ່າຍ ໂດຍລວມກໍ່ໄດ້ມີການຄິດໄລ່ ຈຶ່ງໄດ້ຂຶ້ນແຜນດັ່ງກ່າວ ແລະ ທຄຕລ ກໍ່ຈະພະຍາຍາມສູ້ຊົນປະຕິບັດໃຫ້ບັນລຸແຜນການທີ່ຂຶ້ນໄວ້.

3) **ທ່ານ ສຸລິຍະກອນ ອິນທະວົງ:** ບັນຫາ ATM ຂອງ ທຄຕລ ຜ່ານມາມີຄົນນຳໃຊ້ຫຼາຍ ແລະ ທີ່ຈິງ ສາມາດກົດຖອນເງິນສົດຮ່ວມກັນໄດ້ກັບຕູ້ ATM ຂອງທະນາຄານອື່ນອີກ, ແຕ່ຍັງມີຫຼາຍຄົນບໍ່ຮູ້ ລໍຖ້າກົດ ສະເພາະຕູ້ຂອງ ທຄຕລ.

   - **ທ່ານ ພູຂົງ ຈັນທະຈັກ:** ໄດ້ສະແດງຄວາມຂອບໃຈຕໍ່ຄຳເຫັນ ແລະ ໄດ້ຊີ້ແຈງວ່າ ເມື່ອກ່ອນ ທຄຕລ ມີລະບົບ Bconnex ທີ່ ທຄຕລ ຄຸ້ມຄອງ ແລະ ໄດ້ໂອນເຂົ້າໃນໂຄງການ LAPS ຂອງ ທະນາຄານແຫ່ງ ສປປ ລາວ, ເຊິ່ງກຳລັງຈະກາຍເປັນບໍລິສັດ Lao National Payment Network ທີ່ເປັນບໍລິສັດນິຕິບຸກຄົນ ເຊິ່ງຈະມີການໂຄສະນາໃຫ້ຫຼາຍຂຶ້ນ.

4) **ທ່ານນາງ ພອນດາວັນ ພົມສະຫວັນ:** ຢາກຮູ້ວິທີການໃນການຮັບພະນັກງານໃໝ່ຂອງ ທຄຕລ ມີຂັ້ນຕອນການປະຕິບັດແນວໃດ?

   - **ທ່ານ ພູຂົງ ຈັນທະຈັກ** ຕອບວ່າ: ກ່ຽວກັບການຮັບພະນັກງານ ທຄຕລ ມີລະບຽບການພາຍໃນ, ມີລະບຽບຂັ້ນຕອນ, ແຕ່ລະພະແນກ-ສາຂາ ຂຶ້ນແຜນຄວາມຕ້ອງການພະນັກງານ ຜ່ານຄະນະກຳມະການສ້າງແຜນ ເພື່ອທຽບຄວາມຕ້ອງການພະນັກງານກັບແຜນການປະຕິບັດວຽກງານຕົວຈິງ. ໃນການຮັບພະນັກງານແມ່ນມີການປະກາດຮັບຕາມເງື່ອນໄຂຂອງແຕ່ລະຕຳແໜ່ງງານ ເຊິ່ງຜູ້ສະໝັກຕ້ອງຜ່ານການສອບເສັງຂຽນ ແລະ ສຳພາດ ແລ້ວເອົາຄະແນນລວມກັນ ເພື່ອກຳນົດຜູ້ສະໝັກທີ່ຄົບເງື່ອນໄຂ.
   - **ທ່ານ ປອ ບຸນເຫຼືອ ສິນໄຊວໍຣະວົງ** ໄດ້ເສີມຕື່ມວ່າ: ບັນຫາບຸກຄະລາກອນ ສະພາບໍລິຫານໄດ້ເອົາໃຈໃສ່ຕິດຕາມ. ການຮັບພະນັກງານຂອງ ທຄຕລ ມີການປະກາດຮັບສະໝັກ, ສອບເສັງ ແລະ ການສຳພາດ ເພື່ອຄັດເອົາຄົນເກັ່ງມີຄຸນນະພາບ, ຄັດເລືອກຢ່າງໂປ່ງໃສ ແລະ ຄະແນນກໍ່ມີການປະກາດໃຫ້ທຸກຄົນຮູ້.

5) **ທ່ານ ເຄນ ແສງມະນີ:** ໄດ້ສະແດງຄວາມຍິນດີວ່າເງິນປັນຜົນໃນປີ 2018 ເປັນຈຳນວນທີ່ສູງກວ່າທຸກປີ. ແຕ່ຂໍສະເໜີໃຫ້ ທຄຕລ ຄວນເພີ່ມການເປີດເຜີຍຂໍ້ມູນການເງິນທີ່ມີລັກສະນະວິເຄາະ ເພື່ອເປັນຂໍ້ມູນສຳລັບນັກລົງທຶນ ແລະ ຜູ້ທີ່ສົນໃຈຕື່ມ. ແຜນການປຸກສ້າງອາຄານຫຼັງໃໝ່ຂອງ ທຄຕລ ທີ່ເຄີຍຜ່ານການຮັບຮອງໃນກອງປະຊຸມແລ້ວ, ມີຄວາມຄືບໜ້າແນວໃດ?

   - **ທ່ານ ພູຂົງ ຈັນທະຈັກ:** ໄດ້ມີຄຳເຫັນວ່າເລື່ອງການເປີດເຜີຍຂໍ້ມູນຕ່າງໆໃນເວບໄຊ ແມ່ນມີລະບຽບການຄຸ້ມຄອງ. ຜ່ານມາ ທຄຕລ ກໍ່ໄດ້ເອົາໃຈໃສ່ໃນການເປີດເຜີຍຂໍ້ມູນຕ່າງໆ. ສຳຫຼັບການວິເຄາະຂໍ້ມູນຕ່າງໆ ໂດຍທົ່ວໄປບໍລິສັດຫຼັກຊັບ ກໍເປັນຜູ້ສ້າງບົດລາຍງານວິເຄາະນີ້ ແລະ ສະໜອງຂໍ້ມູນຕໍ່ຜູ້ຖືຮຸ້ນ.
   - ຕໍ່ກັບໂຄງການອາຄານຫຼັງໃໝ່ຂອງ ທຄຕລ ໄດ້ມີການໂຈະໄວ້ກ່ອນ ເນື່ອງຈາກເງື່ອນໄຂດ້ານແຫຼ່ງທຶນຂອງ ທຄຕລ ບໍ່ທັນພຽງພໍ ແລະ ຕ້ອງໄດ້ໃຊ້ທຶນຈຳນວນຫຼາຍ. ການຂະຫຍາຍຈຸດບໍລິການຕ່າງໆຂອງ ທຄຕລ ແມ່ນເນັ້ນໃສ່ການເຊົ່າເປັນສ່ວນໃຫຍ່. ຕໍ່ໜ້າຖ້າກົດຈະການຂະຫຍາຍຕົວດີ, ມີແຫຼ່ງທຶນພຽງພໍ ທຄຕລ ກໍ່ອາດຈະຄົ້ນຄວ້ານຳສະເໜີໂຄງການອາຄານຫຼັງໃໝ່ຜ່ານກອງປະຊຸມຄືນຕື່ມ.

ເມື່ອບໍ່ມີຄຳຖາມອື່ນໃດແລ້ວ, ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມໃນເວລາ 16:00 ໂມງຂອງວັນດຽວກັນ.

ປະທານກອງປະຊຸມ	ຜູ້ບັນທຶກ
ປອ. ບຸນເຫຼືອ ສິນໄຊວໍຣະວົງ	ສອນນາລິນ ແສງມະນີ

ເອກະສານຄັດຕິດ 3

ລາຍງານການເຄື່ອນໄຫວດຳເນີນງານຂອງ ທຄຕລ ປະຈຳປີ 2019 ໂດຍຫຍໍ້

1. ສະພາບເສດຖະກິດຂອງ ສປປ ລາວ ໃນປີ 2019

ເສດຖະກິດລາວ ສືບຕໍ່ຂະຫຍາຍຕົວຊ້າລົງໃນລະດັບ 6,4% ເຊິ່ງຫຼຸດເປົ້າໝາຍທີ່ລັດຖະບານຄາດໄວ້ໃນລະດັບ 6,7%, ລາຍໄດ້ສະເລ່ຍຕໍ່ຄົນເທົ່າກັບ 2.683 ໂດລາສະຫະລັດ ເຊິ່ງຫຼຸດຄາດໝາຍທີ່ລັດຖະບານກຳນົດໄວ້ 2.726 ໂດລາສະຫະລັດ ສາເຫດມາຈາກຫຼາຍປັດໄຈ ຈາກເສດຖະກິດພາກພື້ນ ແລະ ສາກົນຂະຫຍາຍໂຕຊ້າລົງ, ໄພທຳມະຊາດ (ແຫ້ງແລ້ງ ແລະ ນ້ຳຖ້ວມ), ຫົວໜ່ວຍທຸລະກິດທີ່ສ້າງຖານລາຍຮັບແບບຍືນຍົງຍັງບໍ່ຫຼາກຫຼາຍ, ການຜະລິດບໍ່ສາມາດແຂ່ງຂັນຕ່າງປະເທດ, ການຂາດດຸນການຄ້າຕໍ່ເນື່ອງ, ການຄຸ້ມຄອງເງິນຕາຕ່າງປະເທດຍັງບໍ່ປະຕິບັດໄດ້ຢ່າງເຕັມຮູບແບບ.

ສ່ວນຂະແໜງອຸດສາຫະກຳຂະຫຍາຍໂຕຊ້າລົງຈາກ 7,7% ເປັນ 7,1% ເນື່ອງຈາກການຂະຫຍາຍໂຕຊ້າລົງຂອງຂະແໜງພະລັງງານໄຟຟ້າຈາກ 9% ເປັນ 6,1% ສາເຫດຍ້ອນປະລິມານນ້ຳບໍ່ພຽງພໍ ແລະ ໂຄງການໄຟຟ້າຄວາມຮ້ອນຫົງສາໄດ້ຢຸດການຜະລິດຊົ່ວຄາວ. ຂະແໜງການກໍ່ສ້າງຂະຫຍາຍຊ້າລົງ ເນື່ອງຈາກໂຄງການທາງດ່ວນແມ່ນຢູ່ໃນຊ່ວງບຸກເບີກ ແລະ ການກໍ່ສ້າງທາງລົດໄຟລາວ-ຈີນໄດ້ສຳເລັດພາກການກໍ່ສ້າງມາຫຼາຍແລ້ວ. ສຳລັບຂະແໜງກະສິກຳເຖິງແມ່ນຈະໄດ້ຮັບຜົນກະທົບຈາກໄພທຳມະຊາດ ແຕ່ໄດ້ຮັບແຮງຍູ້ຈາກການຂະຫຍາຍໂຕໃນຂະແໜງການລ້ຽງສັດ, ປ່າໄມ້ ແລະ ປະມົງ ສິ່ງຜົນໃຫ້ຂະຍາຍໂຕຈາກ 2,5% ເປັນ 2,8% ແລະ ລາຍຮັບຈາກພາສີ-ອາກອນເພີ່ມຂຶ້ນ ເນື່ອງຈາກການປະຕິຮູບການຈັດເກັບລາຍຮັບ ທັນເຂົ້າສູ່ລະບົບທັນສະໄໝຂຶ້ນ.

- **ອັດຕາເງິນເຟີ້** ເພີ່ມຂຶ້ນຈາກ 2,04% ເປັນ 3,32% ໃນປີ 2019 ສາເຫດຍ້ອນລາຄາສະບຽງອາຫານເພີ່ມຂຶ້ນ (ເຂົ້າ, ຜັກ, ຊີ້ນ) ເພີ່ມຂຶ້ນ ຍ້ອນໄພທຳມະຊາດ ແລະ ໂລກລະບາດໃນສັດ. ສະເພາະເງິນເຟີ້ໝວດສະບຽງອາຫານເພີ່ມຂຶ້ນຈາກ 1,2% ໃນQ4/2018 ເປັນ 9,8% ໃນ Q4/2019 ເນື່ອງຈາກການອ່ອນຄ່າຂອງເງິນກີບ/ບາດ ເນື່ອງຈາກລາວນຳເຂົ້າສິນຄ້າຈາກໄທກວມ 60% ຂອງການນຳເຂົ້າທັງໝົດ.
- ອັດຕາແລກປ່ຽນກີບ/ໂດລາສະຫະລັດໃນປີ 2019 ທຽບໃສ່ປີ 2018 ເພີ່ມຂຶ້ນສະເລ່ຍ **3,4% ຈາກ 8.407 ກີບ/ໂດລາ ເປັນ 8.690,7 ກີບ/ໂດລາ.** ສ່ວນຕ່າງອັດຕາແລກປ່ຽນລະຫວ່າງຕະຫຼາດນອກ ແລະ ທະນາຄານທຸລະກິດສະເລ່ຍ +2,54%. ສຳລັບເງິນກີບທຽບໃສ່ເງິນບາດເຫັນວ່າອ່ອນຄ່າສະເລ່ຍ **8,22% ຈາກ 264,2 ກີບ/ບາດ ເປັນ 285,6ກີບ/ບາດ** ເຊິ່ງສ່ວນຕ່າງລະຫວ່າງຕະຫຼາດນອກ ແລະ ທະນາຄານທຸລະກິດປະມານ 0,8% ຜ່ານການຕິດຕາມຂໍ້ມູນເຫັນວ່າອັດຕາແລກປ່ຽນ ກີບ/ບາດມີການເໜັງຕີງສູງເຊິ່ງສາເຫດສາມາດສັງລວມໄດ້ດັ່ງນີ້:
- ຄວາມຕ້ອງການເງິນບາດໃນລາວມີສູງເນື່ອງຈາກນຳເຂົ້າສິນຄ້າກວມຫຼາຍກວ່າ 50% ຂອງການນຳເຂົ້າ.
- ການຊື້ຂາຍສິນຄ້າ-ບໍລິການບາງປະເພດ ເປັນເງິນບາດ ໂດຍສະເພາະການຊື້-ຂາຍ ທີ່ດິນ ສິ່ງຜົນໃຫ້ຄວາມຕ້ອງການເງິນບາດສູງຂຶ້ນ.
- ນັກລົງທຶນຫັນມາຖືຄອງເງິນບາດຫຼາຍກວ່າເງິນຂອງປະເທດອື່ນ ເນື່ອງຈາກມີຄວາມຜັນຜວນໜ້ອຍສິ່ງຜົນໃຫ້ເງິນບາດທຽບໃສ່ໂດລາແຂງຄ່າໃນຕ່າງປະເທດ ແລະ ກະທົບຕໍ່ອັດຕາແລກປ່ຽນໃນລາວຢ່າງຫຼີກລ່ຽງບໍ່ໄດ້.

2. ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ທຄຕລ

ໃນໄລຍະ 01 ປີທີ່ຜ່ານມາ ທຄຕລ ໄດ້ປະຕິບັດວຽກງານພົ້ນເດັ່ນຄື: ສຳເລັດການຈັດກອງປະຊຸມສະພາບໍລິຫານຂອງ ທຄຕລ ສະໄໝສາມັນ ຈຳນວນ 7 ຄັ້ງ; ກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2018 ຈຳນວນ 1 ຄັ້ງ, ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ 4 ຄັ້ງ, ເປີດເຜີຍມະຕິກອງປະຊຸມສະພາບໍລິຫານ, ບົດລາຍງານຜົນ

ການດຳເນີນທຸລະກິດຂອງ ທຄຕລ ຜ່ານລະບົບເປີດເຜີຍຂອງຕະຫຼາດຫຼັກຊັບລາວ. ເຊັນສັນຍາວ່າດ້ວຍການບໍລິການດ້ານການເງິນ ແລະ ຈຳໜ່າຍຮຸ້ນ ທຄຕລ 19% ຂອງກະຊວງການເງິນລະຫວ່າງ ທຄຕລ ກັບ ບໍລິສັດຫຼັກຊັບລາວ-ຈີນ ຈຳກັດ, ພ້ອມທັງສຳເລັດການດຳເນີນການຂາຍຮຸ້ນອອກສູ່ສັງຄົມຈຳນວນ 10% ຕາມເວລາທີ່ກຳນົດ. ສຳເລັດແຍກພະແນກຄຸ້ມຄອງສິນເຊື່ອອອກເປັນ 3 ຄື: ພະແນກປະຕິບັດການສິນເຊື່ອ, ພະແນກຂາຍຜະລິດຕະພັນສິນເຊື່ອ, ພະແນກບໍລິຫານສິນເຊື່ອ ແລະ ສ້າງຕັ້ງພະແນກນິຕິກຳ.

ທຄຕລ ເຂົ້າເປັນສະມາຊິກໂດຍກົງຂອງ AMEX; ມີການອອກຜະລິດຕະພັນໃໝ່ BCEL MasterCard; ຮ່ວມມືກັບ Swift Pass ໃນການບໍລິການຊຳລະເງິນດ້ວຍ WeChat ແລະ AliPay; ຮ່ວມມືກັບ ທະນາຄານເອັສທີ ຈຳກັດວ່າດ້ວຍການຊຳລະຄ່າທຳນຽມທາງ, ພາສີທີ່ດິນ ແລະ ຮ່ວມມືກັບຢູນຽນເພສາກົນ UPI ຄັ້ງທຳອິດໃນ ສປປ ລາວ ໃນການໃຫ້ບໍລິການຊຳລະສະສາງຜ່ານ QR CODE UnionPay, ຮ່ວມມືກັນລະຫວ່າງ ທະນາຄານທະນາຊາດ ແລະ ທຄຕລ ນຳສະເໜີວິທີຊຳລະສະສາງຂ້າມຊາຍແດນດ້ວຍລະບົບ QR Code ໃນໂທລະສັບມືຖືຄັ້ງທຳອິດໃນງານ ASEAN Payment Connectivity Exhibition, ພັດທະນາຜະລິດຕະພັນ BCEL One ເພື່ອໃຫ້ລູກຄ້າອອກບັດ MasterCard Prepaid ແລະ ພັດທະນາລະບົບຖອນເງິນສົດໂດຍບໍ່ໄດ້ນຳໃຊ້ບັດ (QR Cardless) ຢູ່ຕູ້ເອທີເອັມ. ລວມທັງເປັນໜຶ່ງໃນທະນາຄານທີ່ໄດ້ຮ່ວມລົງນາມສັນຍາຮ່ວມທຶນສ້າງຕັ້ງ ບໍລິສັດ ລາວເນເຊີນນໍເພເມັ້ນເນັດເວີກ ຈຳກັດ (LAPNET) ພາຍໃຕ້ການນຳພາຂອງ ທະນາຄານແຫ່ງ ສປປ ລາວ ຮ່ວມກັບອີກ 6 ທະນາຄານໃນລາວ ແລະ ຜູ້ຖືຮຸ້ນຕ່າງປະເທດຄື: ບໍລິສັດ ຢູນຽນເພ ສາກົນ. ພ້ອມດຽວກັນຜະລິດຕະພັນ BCEL Road Tax ກໍ່ສາມາດຍາດ ລາງວັນ ICT AWARD 2019 ຮອງຊະນະເລີດລະດັບປະເທດ ແລະ ລາງວັນຊະນະເລີດລະດັບອາຊຽນ, ພັດທະນາໂຄງການ Smart VAT Phase II ແລະ ເຊື່ອມລະບົບ ບ 53 ການຊຳລະຄ່າທຳນຽມນຳເຂົ້າລົດຊື່ວຄາວຄົນຕ່າງປະເທດຂອງກົມພາສີໃຫ້ມາຊຳລະຢູ່ຕູ້ບໍລິການອັດຕະໂນມັດ ທີ່ຂົວມິດຕະພາບລາວ-ໄທ 1 ລວມນຳມີການເຊັນສັນຍາ Bill payment ກັບສະຖາບັນການເງິນ ແລະ ບໍລິສັດຕ່າງໆ 8 ພາກສ່ວນ. ພ້ອມກັນນັ້ນ, ເພື່ອພັດທະນາຮອງຮັບການຂະຫຍາຍຕົວດ້ານວຽກງານບໍລິການໃນອານາຄົດ ທຄຕລ ໄດ້ເຊັນສັນຍາການຮ່ວມມືພັດທະນາລະບົບຄຸ້ມຄອງທະນາຄານໃໝ່ ຮ່ວມກັບ ບໍລິສັດ ໄຮຊັນ ເຕັກໂນໂລຊີ ໂຮລດິງ ຈຳກັດ

ເພື່ອເຮັດໃຫ້ວຽກງານການບໍລິການໄດ້ບໍລິການສັງຄົມຢ່າງທົ່ວເຖິງ ແລະ ຫຼຸດຜ່ອນຄວາມແອອັດໃນວັນລັດຖະການ ທຄຕລ ໄດ້ເປີດບໍລິການໃນວັນເສົາ-ທິດ ໂດຍເນັ້ນໃສ່ໜ່ວຍບໍລິການທີ່ມີບໍລິມາດການບໍລິການຫຼາຍຈຳນວນ 5 ໜ່ວຍໃນເບື້ອງຕົ້ນກ່ອນຄື: ໜ່ວຍບໍລິການໄອເຕັກ, ໜ່ວຍບໍລິການຕະຫຼາດເຊົ້າ; ໜ່ວຍບໍລິການສີໄຄ, ໜ່ວຍບໍລິການທົ່ງຈະເລີນ ແລະ ໜ່ວຍບໍລິການຕະຫຼາດໃໝ່ປາກເຊ. ນອກຈາກນັ້ນ, ຍັງໄດ້ປ່ຽນຊື່ໜ່ວຍບໍລິການໄຊເສດຖາ (ຊື່ເດີມ) ທີ່ຂຶ້ນກັບສາຂາໄຊເສດຖາ ປ່ຽນມາເປັນ **ໜ່ວຍບໍລິການຮ່ອງແກ** (ຊື່ໃໝ່).

3. ຜົນການດຳເນີນທຸລະກິດ ໃນປີ 2019 ມາດຖານສາກົນສະເພາະກິດຈະການ ທຽບໃສ່ແຜນປີ 2019 (ເອກະສານຄັດຕິດ 4)

- ຍອດຊັບສິນ/ໜີ້ສິນ: **46.547.208** ລ້ານກີບ, ທຽບໃສ່ແຜນການປີ 2019 ປະຕິບັດໄດ້ 108,9%
- ຍອດສິນເຊື່ອທັງໝົດ: 26.987.990 ລ້ານກີບ, ທຽບໃສ່ແຜນການປີ 2019 ປະຕິບັດໄດ້ 104,5%
- ຍອດເງິນຝາກທັງໝົດ: 40.004.656 ລ້ານກີບ, ທຽບໃສ່ແຜນການປີ 2019 ປະຕິບັດໄດ້ 112%
- ກຳໄລກ່ອນອາກອນ: 430.486 ລ້ານກີບ, ທຽບໃສ່ແຜນການປີ 2019 ປະຕິບັດໄດ້ 76,2%
- ກຳໄລຫຼັງອາກອນ: **329.482** ລ້ານກີບ, ທຽບໃສ່ແຜນການປີ 2019 ປະຕິບັດໄດ້ 75,5%

4. ການປະຕິບັດແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ການປະຕິບັດແຜນປະກອບວັດຖຸເຕັກນິກ ທົ່ວລະບົບ: ປະຕິບັດໄດ້ 80,59 ຕື້ກີບ ທຽບໃສ່ແຜນການປີປະຕິບັດໄດ້ 47%, ໃນນັ້ນ, ສຳນັກງານໃຫຍ່ປະຕິບັດໄດ້ 36,33 ຕື້ກີບເທົ່າກັບ 24% ຂອງແຜນການປີ ແລະ ລວມສາຂາໃນທົ່ວລະບົບ 44,26 ຕື້ກີບ ເທົ່າກັບ 30,62% ຂອງແຜນການປີ (ສາຍເຫດເນື່ອງມາຈາຊັບສິນບັດສ່ວນນຶ່ງແມ່ນຍັງຢູ່ຂະບວນການພວມຊື້ພວມກໍ່ສ້າງ) ແລະ ເນື່ອງຈາກໃນປີ 2019 ທຄຕລ ຍັງບໍ່ທັນສາມາດຂະຫຍາຍໜ່ວຍບໍລິການສຳເລັດ (ຍັງບໍ່ທັນສາມາດຂະຫຍາຍໜ່ວຍບໍລິການໄດ້) ປະຈຸບັນແມ່ນຢູ່ໃນຂັ້ນຕອນການດຳເນີນການກໍ່ສ້າງສ້ອມແປງ ຕົບແຕ່ງ ແລະ ອີກສ່ວນນຶ່ງແມ່ນຍັງຢູ່ໃນຂັ້ນຕອນການສຳຫຼວດຄວາມເປັນໄປໄດ້.

ຫົວໜ່ວຍລ້ານ

ລ/ດ	ເນື້ອໃນ	ແຜນໂອນເຂົ້າຊັບສິນບັດຄົງທີ່ 2019		ປະຕິບັດ 2019		ທຽບແຜນ
		ລາຍການ	ຈຳນວນເງິນ	ລາຍການ	ຈຳນວນເງິນ	%
1	ສິດນຳໃຊ້ທີ່ດິນ	-	16.700	7	844	5%
2	ໂປຼແກຼມ	-	12.817	6	4.986	39%
3	ສິ່ງປຸກສ້າງ, ສ້ອມແປງ ແລະ ຕົບແຕ່ງ	-	42.031		25.102	60%
4	ພາຫານະ	31	3.299	15	3.513	107%
5	ເຄື່ອງເຢັນ ແລະ ສິ່ງຕິດຕັ້ງ ຈັດວາງ	279	3.499	113	1.592	45%
6	ເຄື່ອງຈັກຮັບໃຊ້ຫ້ອງການ	4.173	89.649	2.225	42.312	47%
7	ເຄື່ອງຮັບໃຊ້ສຳນັກງານ ເຟີນິເຈີຕ່າງໆ	1.205	4.159	790	2.244	54%
ລວມ		**5.688**	**172.153**	**3.156**	**80.592**	**47%**

5. ແຜນຂະຫຍາຍໜ່ວຍບໍລິການ

ໃນປີ 2019 ແຜນຂະຫຍາຍໜ່ວຍບໍລິການມີທັງໝົດ 11 ໜ່ວຍ ເຊິ່ງ ທຄຕລ ຍັງບໍ່ສາມາດຂະຫຍາຍໜ່ວຍບໍລິການໄດ້. ເນື່ອງຈາກອີງໃສ່ການຊອກຫາສະຖານທີ່ ທີ່ມີຄວາມເໝາະສົມ, ຂະບວນການດຳເນີນການສ້ອມແປງ ຕົບແຕ່ງຕ່າງໆແມ່ນຍັງບໍ່ສາມາດດຳເນີນການຕາມແຜນການ, ສຳລັບການຂະຫຍາຍໜ່ວຍບໍລິການຈະເລັ່ງໃສ່ການຂະຫຍາຍ ໜ່ວຍບໍລິການໃນຂອບເຂດນະຄອນຫຼວງວຽງຈັນທີ່ເຫັນວ່າມີຄວາມເໝາະສົມ ແລະ ມີປະສິດທິພາບສູງກ່ອນ

6. ການປະຕິບັດແຜນງານ, ໂຄງການ ແລະ ແຜນວຽກ

ຜ່ານການຈັດຕັ້ງປະຕິບັດແຜນຍຸດທະສາດໄລຍະຍາວ ທຄຕລ ປີ 2019 ປະກອບມີ 6 ແຜນງານ, 32 ໂຄງການ ແລະ 249 ແຜນວຽກ. ການຈັດຕັ້ງປະຕິບັດ ແມ່ນສາມາດສະຫຼຸບໄດ້ດັ່ງນີ້:

- ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຕະຖານສາກົນ ປະຕິບັດໄດ້ 83%
- ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ປະຕິບັດຫຼັກເກນບາເຊວ II ປະຕິບັດໄດ້ 91%
- ສ້າງລະບົບຂໍ້ມູນເພື່ອການບໍລິຫານ ປະຕິບັດໄດ້ 89%
- ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ ປະຕິບັດໄດ້ 77%
- ພັດທະນາການບໍລິຫານບຸກຄະລາກອນ ປະຕິບັດໄດ້ 81%
- ພັດທະນາການບໍລິຫານການເງິນ ແລະ ປະສິດທິພາບການດຳເນີນທຸລະກິດໃຫ້ສູງຂຶ້ນ ປະຕິບັດໄດ້ 83%

ສະຖານະແຜນວຽກ 2019	ຄວາມສຳເລັດ	249
ສຳເລັດ	ສຳເລັດ 100%	167
ກຳລັງດຳເນີນ	ສຳເລັດ 90%-99%	13
	ສຳເລັດ 51-89%	22
	ສຳເລັດ 1-50%	36
	0%	11

7. ວຽກງານຈັດຕັ້ງ-ພະນັກງານ

ມາຮອດທ້າຍປີ 2019 ທຄຕລ ມີພະນັກງານທັງໝົດ 2.060 ຄົນ, ຍິງ 963 ຄົນ. ໃນນັ້ນ, ໃນປີ 2019 ນີ້ໄດ້ຮັບພະນັກງານວິຊາການໃໝ່ທັງໝົດ 200 ຄົນ; ຮັບສັນຍາຈ້າງປະຈຳອະນາໄມ ແລະ ຂັບລົດ 21 ຄົນ, ຍົກເລີກສັນຍາແຮງງານວິຊາການສັນຍາຈ້າງ 7 ຄົນ, ພະນັກງານສັນຍາຈ້າງປະຈຳ 8 ຄົນ ; ພະນັກງານອອກສ້າງເສດຖະກິດຄອບຄົວ 5 ຄົນ, ປົດປ່ອຍອອກຈາກການຈັດຕັ້ງ 5 ຄົນ ແລະ ມີພະນັກງານເສຍຊີວິດ 2 ຄົນ.

8. ລາຍງານການຈຳໜ່າຍຮຸ້ນຂອງກະຊວງການເງິນ ບ້ວງ 19%

ການຈຳໜ່າຍຮຸ້ນຂອງກະຊວງການເງິນບ້ວງ 19% ແມ່ນແບ່ງອອກເປັນ 02 ໄລຍະການຈັດຕັ້ງປະຕິບັດ ຄື:

- ➢ ການຈັດຕັ້ງປະຕິບັດວຽກງານອອກຈຳໜ່າຍຮຸ້ນ ທຄຕລ 10% (ລວມທັງໝົດ 20.772.300 ຮຸ້ນ) ໄດ້ສຳເລັດໃນເດືອນ 11/2019:
  - ແບ່ງຂາຍໃຫ້ນັກລົງທຶນລາຍເດີມ (RO) 2% ເປັນຮຸ້ນຈຳນວນ 4.154.500 ຮຸ້ນ ໃນລາຄາ 5.450 ກີບ/ຮຸ້ນ, ສຳລັບການຂາຍຕົວຈິງຂາຍໄດ້ຈຳນວນ 1.805.300 ຮຸ້ນ ໃນລາຄາ 5.396,04 ກີບ.
  - ຂາຍໃຫ້ນັກລົງທຶນທົ່ວໄປ (PO) 8% ເປັນຈຳນວນ 16.617.800 ຮຸ້ນ ໃນລາຄາ 5.550 ກີບ/ຮຸ້ນ, ຈາກການຂາຍໄດ້ທັງໝົດ 18.967.000 ຮຸ້ນ ໃນລາຄາ 5.495,05 ກີບ.
- ➢ ການຈັດຕັ້ງປະຕິບັດວຽກງານຈຳໜ່າຍຮຸ້ນ ບ້ວງ 9% ເປັນຈຳນວນ 18.695.100 ຮຸ້ນ ແມ່ນຢູ່ໃນໄລຍະການສຶກສາຄົ້ນຄວ້າເງື່ອນໄຂຂໍ້ດີ ແລະ ຂໍ້ເສຍ ຂອງບໍລິສັດຕ່າງໆ ທີ່ສົນໃຈຊື້ຮຸ້ນ ທຄຕລ ເຊິ່ງຄາດວ່າການດຳເນີນການຂາຍຮຸ້ນອາດຈະແກ່ຍາວຮອດ ທ້າຍປີ 2020.

9. ລາຍງານການປ່ຽນແປງໂຄງສ້າງຜູ້ຖືຮຸ້ນ

ພາຍຫຼັງທີ່ ທຄຕລ ໄດ້ດຳເນີນການຂາຍຮຸ້ນສຳເລັດບ້ວງ 10% ແມ່ນໄດ້ເຮັດໃຫ້ໂຄງສ້າງຜູ້ຖືຮຸ້ນ ທຄຕລ ມີການປ່ຽນແປງນະວັນທີ 31 ທັນວາ 2019 ມີດັ່ງລຸ່ມນີ້:

- ລັດຖະບານ(ກະຊວງການເງິນ) ຖືຮຸ້ນຈຳນວນ: 124.634.021 ຮຸ້ນ ກວມ 60%
- ຄູ່ຮ່ວມຮຸ້ນທາງຍຸດທະສາດ: 20.772.359 ຮຸ້ນ ກວມ 10%
- ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດອື່ນໆ: 62.316.920 ຮຸ້ນ ກວມ 30%.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນສະເພາະກິດຈະການສຳລັບຈຸດປະສົງພິເສດ

ສຳລັບປີທີ່ສິ້ນສຸດນະວັນທີ 31 ທັນວາ 2019

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານສະເພາະກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*2019 ລ້ານກີບ*	*2018 ລ້ານກີບ*
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	7	2.152.457	1.931.564
ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ	7	(1.193.701)	(1.000.577)
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	**7**	**958.756**	**930.987**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	8	245.882	258.681
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	8	(29.975)	(22.017)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**8**	**215.907**	**236.664**
ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ	9	34.749	49.719
ຂາດທຶນສຸດທິຈາກການຊື້-ຂາຍອະນຸພັນ	10	(1.204)	-
ລາຍຮັບອື່ນໆຈາກການດຳເນີນງານ	11	116.012	47.107
ລາຍຮັບທັງໝົດຈາກການດຳເນີນງານ		**1.324.220**	**1.264.477**
ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ລູກຄ້າ	18	(314.919)	(221.957)
ຄ່າເສື່ອມມູນຄ່າການລົງທຶນທາງດ້ານການເງິນ	12	(20.650)	(27.246)
ລາຍຮັບສຸດທິຈາກການດຳເນີນງານ		**988.651**	**1.015.274**
ລາຍຈ່າຍພະນັກງານ	13	(300.612)	(331.775)
ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ	22, 23	(71.619)	(71.991)
ຄ່າຫລຸ້ຍຫ້ຽນສິດນຳໃຊ້ຊັບສິນ	24	(6.650)	-
ລາຍຈ່າຍອື່ນໆຈາກການດຳເນີນງານ	14	(179.284)	(152.252)
ລາຍຈ່າຍທັງໝົດຈາກການດຳເນີນງານ		**(558.165)**	**(556.018)**
ກຳໄລກ່ອນອາກອນ		**430.486**	**459.256**
ລາຍຈ່າຍອາກອນກຳໄລ	29.1	(106.644)	(124.020)
ລາຍຈ່າຍອາກອນກຳໄລລໍຖ້າຊຳລະສະສາງ	29.1	5.640	18.420
ກຳໄລສຸດທິພາຍໃນປີ		**329.482**	**353.656**
ກຳໄລຕໍ່ຮຸ້ນ (ກີບ)	**37**	**1.586**	**1.703**

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ວຽງສຸກ ຈຸນທະວົງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ

30 ເມສາ 2020

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານນອກການທຸລະກິດສະເພາະກິດจะการ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*2019 ລ້ານກີບ*	*2018 ລ້ານກີບ*
ກຳໄລສຸດທິພາຍໃນປີ		**329.482**	**353.656**
ລາຍຮັບອື່ນໆນອກການທຸລະກິດ			
ການປ່ຽນແປງໃນເງິນແຮຄ່າເສື່ອມຂອງຫຼັກຊັບທາງການເງິນປະເພດ ມີໄວ້ເພື່ອຂາຍ		-	(2.875)
ການວັດແທກຄືນຂາດທຶນຈາກແຜນກຳນົດຜົນປະ�โยດຫຼັງອອກ ການ	30	(15.897)	(1.411)
ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ		3.815	1.028
ລາຍຮັບນອກການທຸລະກິດພາຍໃນປີ ຫຼັງຫັກອາກອນ		**(12.082)**	**(3.258)**
ຍອດລວມລາຍຮັບນອກການທຸລະກິດພາຍໃນປີ ຫຼັງຫັກອາກອນ		**317.400**	**350.398**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສົງລວມ

ອະນຸມັດໂດຍ:

ທ່ານ ກົງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ວົງສຸກ ຈຸນທະວົງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ

30 ເມສາ 2020

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນສະເພາະກິດຈະການ

ນະວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*31/12/2019 ລ້ານກີບ*	*31/12/2018 ລ້ານກີບ*
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	15	9.202.045	5.334.240
ເງິນຝາກຢູ່ທະນາຄານອື່ນ	16	4.493.536	3.733.419
ເງິນກູ້ໃຫ້ແກ່ລູກຄ້າ	17	27.490.492	24.366.860
ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	19	129.623	151.483
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	20	3.453.937	3.652.772
ການລົງທຶນໃນບັນດາບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ	21	516.047	514.007
ຊັບສິນບັດຄົງທີ່ ແລະ ອຸປະກອນ	22	455.721	449.238
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	23	245.042	246.596
ສິດນຳໃຊ້ຊັບສິນ	24	54.814	-
ຊັບສິນອາກອນລໍຖ້າຊຳລະສະສາງ	29.5	34.521	29.099
ຊັບສິນອື່ນໆ	25	471.430	464.931
ລວມຊັບສິນ		**46.547.208**	**38.942.645**
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ	26	4.063.635	3.413.129
ໜີ້ຕ້ອງສົ່ງລູກຄ້າ	27	36.419.928	29.915.142
ກູ້ຢືມຈາກທະນາຄານອື່ນ	28	3.705.378	3.349.266
ໜີ້ສິນອາກອນພາຍໃນປີ	29.2	41.309	35.793
ໜີ້ສິນອາກອນລໍຖ້າຊຳລະສະສາງ	29.5	-	5.272
ໜີ້ສິນອື່ນໆ	30	224.826	239.533
ລວມໜີ້ສິນ		**44.455.076**	**36.958.135**
ທຶນ			
ທຶນຈົດທະບຽນ	31	1.038.617	1.038.617
ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ	32	604.423	439.550
ກຳໄລສະສົມ		449.092	506.343
ລວມທຶນ		**2.092.132**	**1.984.510**
ລວມໜີ້ສິນ ແລະ ທຶນ		**46.547.208**	**38.942.645**

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ພຸແສງທອງ ອານຸລັກຄຳ	ທ່ານ ກິງສັກ ສຸພອນສີ	ທ່ານ ວຽງສຸກ ຈຸນທະວິງ
ຫົວໜ້າພະແນກບັນຊີສັງລວມ	ຫົວໜ້າພະແນກການເງິນ	ຮອງຜູ້ອຳນວຍການໃຫຍ່

ທະນາຄານ ການຄ້າຕ່າງປະເທດ ລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນະຄອນຫລວງວຽງຈັນ, ສປປ ລາວ

30 ເມສາ 2020

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ใบลายงานส่อมป่ฐนแปงทึนเจ้าของสะเพาะกิดจะกาม
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ທຶນຈົດທະບຽນ ລ້ານກີບ	*ຄັງສະສົມ ຕາມລະບຽບການ ລ້ານກີບ*	*ກຳໄລສະສົມ ລ້ານກີບ*	*ລວມ ລ້ານກີບ*
ยอดเฮือมะวันที 31 ทันวา 2018	**1.038.617**	**439.550**	**506.343**	**1.984.510**
ผินกะทบจากกามจัดตั้งปะติบัด IFRS 16				
มะวันที 01 มังกอน 2019	-	-	(3.923)	(3.923)
เงินปันผิน ที่ได้จ่ายใช้ผู้ถือุ้น ສຳລັບປີ 2018	-	-	(205.855)	(205.855)
ແບ່ງເຂົ້າຄັງສະສົມພາຍໃນປີ 2018	-	164.873	(164.873)	-
ກຳໄລສຸດທິສຳລັບປີ 2019	-	-	329.482	329.482
ลายธับมอกกามทุละกิดอื่มพายในปี 2019	-	-	(12.082)	(12.082)
ในนี้ลวมมี:				
- *ການຕີມູນຄ່າຂາດທຶນຄືນຕາມແຜນກຳນົດຜົນປະໂຫຍດຫຼັງອອກການ*	-	-	*(15.897)*	*(15.897)*
- *ອາກອນກຳໄລທີ່ຕິດພັນກັບອົງປະກອບຂອງລາຍຮັບນອກການທຸລະກິດອື່ນ*	-	-	*3.815*	*3.815*
ยอดเฮือมะวันที 31 ทันวา 2019	**1.038.617**	**604.423**	**449.092**	**2.092.132**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສະເພາະກິດຈະການ (ຕໍ່)

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ທຶນຈົດທະບຽນ ລ້ານກີບ	*ຄັງສະສົມ ຕາມລະບຽບການ ລ້ານກີບ*	*ເງິນແຮສຳລັບຫຼັກ ຊັບມີໄວ້ເພື່ອຂາຍ ລ້ານກີບ*	*ກຳໄລສະສົມ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອນະວັນທີ 31 ທັນວາ 2017	**1.038.617**	**380.382**	**2.186**	**310.827**	**1.732.012**
ແບ່ງສ່ວນສຳລັບເງິນປັນຜົນທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ສຳລັບປີ 2017	-	-	-	(97.900)	(97.900)
ແບ່ງເຂົ້າຄັງສະສົມພາຍໃນປີ 2017	-	59.168	-	(59.168)	-
ກຳໄລສຸດທິສຳລັບປີ 2018	-	-	-	353.656	353.656
ລາຍຮັບນອກການທຸລະກິດອື່ນພາຍໃນປີ 2018	-	-	(2.186)	(1.072)	(3.258)
ໃນນີ້ລວມມີ:					
- *ການຕີມູນຄ່າຂາດທຶນຄືນຕາມແຜນກຳນົດຜົນປະໂຫຍດຫຼັງ ອອກການ*	-	-	-	*(1.411)*	*(1.411)*
- *ສ່ວນປ່ຽນແປງ ໃນມູນຄ່າຍຸຕິທຳຂອງຊັບສິນທາງການເງິນ ຫຼັກຊັບມີໄວ້ເພື່ອຂາຍ*	-	-	*(2.875)*	-	*(2.875)*
- *ອາກອນກຳໄລທີ່ຕິດພັນກັບອົງປະກອບຂອງລາຍຮັບນອກ ການທຸລະກິດອື່ນ*	-	-	*689*	*339*	*1.028*
ຍອດເຫຼືອນະວັນທີ 31 ທັນວາ 2018	**1.038.617**	**439.550**	**-**	**506.343**	**1.984.510**

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກົງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ວຽງສຸກ ຈຸນທະວິງ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ

30 ເມສາ 2020

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	*2019 ລ້ານກີບ*	*2018 ລ້ານກີບ*
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**430.486**	**459.256**
ການດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ	22, 23, 24	78.269	71.991
ການດັດແກ້ຍອດຍົກມາພາຍໃຕ້ IFRS 16		(3.923)	-
ລາຍຈ່າຍຄ່າເສື່ອມມູນຄ່າ	12, 18	335.569	249.203
ລາຍຈ່າຍສຳລັບສະສາງຊັບສົມບັດພວມກໍ່ສ້າງ	14	13.351	-
ລາຍຈ່າຍສຳລັບພະນັກງານຫຼັງອອກການ	13	7.325	24.134
ລາຍຮັບດອກເບ້ຍ	7	(2.152.457)	(1.931.564)
ລາຍຈ່າຍດອກເບ້ຍ	7	1.193.701	1.000.577
ລາຍຮັບເງິນປັນຜົນ	11	(10.133)	(32.638)
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງ ດ້ານຊັບສິນ ແລະ ໜີ້ສິນ		**(107.812)**	**(159.041)**
ສ່ວນປ່ຽນແປງ ໃນຊັບສິນຈາກການດຳເນີນງານ			
ປ່ຽນແປງສຸດທິໃນຍອດເຫຼືອຢູ່ທະນາຄານອື່ນ		(120.674)	(1.498.113)
ປ່ຽນແປງສຸດທິໃນເງິນກູ້ໃຫ້ແກ່ລູກຄ້າ		(2.809.910)	(1.982.178)
ລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		200.045	280.969
ລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ		-	762
ປ່ຽນແປງສຸດທິໃນຊັບສິນອື່ນໆ		(64.752)	(26.885)
ສ່ວນປ່ຽນແປງ ໃນໜີ້ສິນຈາກການດຳເນີນງານ			
ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ		1.039.276	1.299.350
ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງລູກຄ້າ		6.587.377	1.448.852
ປ່ຽນແປງສຸດທິໃນໜີ້ສິນອື່ນໆ		(26.333)	33.851
ດອກເບ້ຍທີ່ໄດ້ຮັບ		1.515.567	1.681.209
ດອກເບ້ຍທີ່ໄດ້ຈ່າຍ		(1.308.950)	(904.321)
ອາກອນທີ່ໄດ້ຈ່າຍພາຍໃນປີ	29.3	(108.909)	(102.247)
ກະແສເງິນສົດສຸດທິຈາກການດຳເນີນງານ		**4.794.925**	**72.208**
ການເຄື່ອນໄຫວດ້ານການລົງທຶນ			
ການຈັດຊື້ ແລະ ການກໍ່ສ້າງຊັບສົມບັດຄົງທີ່		(100.868)	(120.335)
ຮັບຈາກການສະສາງ/ຂາຍຊັບສົມບັດຄົງທີ່		24.320	-
ການລົງທຶນຮ່ວມທີ່ໄດ້ຈ່າຍ		(2.040)	-
ຮັບເງິນປັນຜົນ		10.133	32.638
ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ໃນການເຄື່ອນໄຫວການລົງທຶນ		**(68.455)**	**(87.697)**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	2019 ລ້ານກີບ	2018 ລ້ານກີບ
ກິດຈະກຳການດຳເນີນງານການເຄື່ອນໄຫວທາງການເງິນ			
ຈ່າຍເງິນປັນຜົນ		(205.855)	(97.900)
ກະແສເງິນສົດສຸດທິນຳໃຊ້ໃນການເຄື່ອນໄຫວທາງການ ເງິນ		**(205.855)**	**(97.900)**
ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ		**4.520.615**	**(113.389)**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ		**7.201.769**	**7.315.158**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	**34**	**11.722.384**	**7.201.769**

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ພູແສງທອງ ອານຸລັກຄຳ	ທ່ານ ກິງສັກ ສຸພອນສີ	ທ່ານ ວຽງສຸກ ຈຸນທະວິງ
ຫົວໜ້າພະແນກບັນຊີສັງລວມ	ຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ.

30 ເມສາ 2020

ແຜນການປະຈຳປີ 2020

1. ເສດຖະກິດມະຫາພາກ ສ ປ ປ ລາວ ປີ 2019 ແລະ ແນວໂນ້ມ 2020

ເສດຖະກິດລາວ ສືບຕໍ່ຂະຫຍາຍຕົວຊ້ຳລົງໃນລະດັບ 6,4%[1] ໂດຍລາຍໄດ້ສະເລ່ຍຕໍ່ຄົນເທົ່າກັບ 2.683 ໂດລາສະຫະລັດ ເຊິ່ງຫຼຸດເປົ້າໝາຍທີ່ລັດຖະບານຄາດ ເຊິ່ງສາເຫດມາຈາກຫຼາຍປັດໄຈເຊັ່ນ ເສດຖະກິດພາກພື້ນ ແລະ ສາກົນຂະຫຍາຍໂຕຊ້ຳລົງ, ໄພທຳມະຊາດ (ແຫ້ງແລ້ງ ແລະ ນ້ຳຖ້ວມ), ແລະ ການຂາດດຸນການຄ້າຕໍ່ເນື່ອງ. ຂະແໜງອຸດສາຫະກຳຂະຫຍາຍໂຕຊ້ຳລົງຈາກ 7,7% ເປັນ 7,1% ເນື່ອງຈາກການຂະຫຍາຍໂຕຊ້ຳລົງຂອງຂະແໜງພະລັງງານໄຟຟ້າ, ຂະແໜງກະສິກຳເຖິງແມ່ນຈະໄດ້ຮັບຜົນກະທົບຈາກໄພທຳມະຊາດ ແຕ່ໄດ້ຮັບແຮງຍູ້ຈາກການຂະຫຍາຍໂຕໃນຂະແໜງການລ້ຽງສັດ, ປ່າໄມ້ ແລະ ປະມົງ ສົ່ງຜົນໃຫ້ຂະຍາຍໂຕເພີ່ມຂຶ້ນເລັກໜ້ອຍ. ອັດຕາເງິນເຟີ້ເພີ່ມຂຶ້ນຈາກ 2,04% ເປັນ 3,32% ໃນປີ 2019 ໂດຍລາຄາສະບຽງອາຫານເພີ່ມຂຶ້ນ ຍ້ອນໄພທຳມະຊາດ ແລະ ໂລກລະບາດໃນສັດ.

ສຳລັບປີ 2020, ເສດຖະກິດຂອງລາວຄາດວ່າຈະຂະຫຍາຍໂຕຊ້ຳລົງ ໃນລະດັບ 3,3% ໂດຍຫຼຸດເປົ້າໝາຍທີ່ລັດຖະບານຄາດຄະເນໄວ້ໃນຕົ້ນປີທີ່ລະດັບ 6,5% ເຊິ່ງສາເຫດກໍ່ຍ້ອນການແຜ່ລະບາດຂອງພະຍາດ COVID-19 ສົ່ງຜົນໃຫ້ການສ້າງລາຍຮັບຂອງຫົວໜ່ວຍທຸລະກິດຫຼາຍແຫ່ງອາດບໍ່ໄດ້ຕາມແຜນເນື່ອງຈາກບໍ່ສາມາດດຳເນີນທຸລະກິດໄດ້ເຕັມສ່ວນ ໂດຍສະເພາະທຸລະກິດທີ່ຕິດພັນກັບຂະແໜງບໍລິການ, ການສົ່ງອອກ, ການທ່ອງທ່ຽວ, ທີ່ພັກອາໄສ ແລະ ຮ້ານອາຫານ. ນອກຈາກນັ້ນ, ສະພາບເສດຖະກິດພາກພື້ນ ແລະ ສາກົນຍັງສືບຕໍ່ຂະຫຍາຍໂຕຊ້ຳລົງ ລວມເຖິງການຂາດດຸນການຄ້າຂອງລາວ, ການຂາດດຸນງົບປະ ມານຂອງລັດຖະບານ, ລະດັບຄັງສຳຮອງເງິນຕາຕ່າງປະເທດ ແລະ ປັດໄຈອື່ນໆທີ່ລ້ວນແຕ່ສົ່ງຜົນກະທົບຕໍ່ການຂະຫຍາຍໂຕຂອງເສດຖະກິດລາວໃນປີ 2020.

[1] ບົດລາຍງານເສດຖະກິດຂອງອົງການ IMF ສະບັບເດືອນເມສາ 2020

https://www.imf.org/en/Publications/WEO/Issues/2020/04/14/weo-april-2020

[1] ກະຊວງແຜນການ ແລະ ການລົງທຶນ 2020

2. ແຜນດຳເນີນງານ

- **ວິໄສທັດ ທຄຕລ**

ໄດ້ກຳນົດວິໄສທັດລວມຂອງຕົນຕາມແຜນຍຸດທະສາດໄລຍະຍາວ ແຕ່ປີ 2016-2020 ຄື: *"**ເປັນທະນາຄານທີ່ເຂັ້ມ ແຂງ ທັນສະໄໝ ກ້າວສູ່ມາດຕະຖານສາກົນ**"*.

- **ພາລະກິດ**

ທຄຕລ ຍັງສືບຕໍ່ຈັດຕັ້ງປະຕິບັດແຜນປັບປຸງພາລະກິດ ສຳຄັນໆ ຂອງ ທຄຕລ 2016-2020 ຄື ***:*** "ພັດທະນາລະບົບບໍລິຫານອົງກອນທີ່ເຂັ້ມແຂງ ເນັ້ນການປັບປຸງທຸລະກິດທະນາຄານໃຫ້ແທດເໝາະກັບສະພາບການປ່ຽນແປງໃນໄລຍະໃໝ່ ຖືເອົາການສ້າງວັດທະນະທຳຄຸ້ມຄອງບໍລິຫານຄວາມສ່ຽງໃຫ້ເຂັ້ມແຂງ ແລະ ສອດຄ່ອງຕາມຫຼັກການ Basel II, ຍົກສູງປະສິດທິພາບການດຳເນີນທຸລະກິດ, ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານບໍລິຫານທີ່ມີສັກກາຍະພາບ,

ຄົບຖ້ວນ, ຖືກ ຕ້ອງ ແລະ ທັນເວລາ, ໄດ້ມາດຕະຖານສາກົນ ທາງດ້ານລະບົບລາຍງານ, ນຳໃຊ້ລະບົບເທັກໂນໂລຊີທີ່ທັນສະໄໝ ຮັບປະກັນວຽກງານບໍລິການ, ການຮັກສາຖານຂໍ້ມູນ ແລະ ຍົກລະດັບຄວາມຮູ້, ຄວາມຊ່ຽວຊານສະເພາະດ້ານໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ".

- **ແຜນງານ ແລະ ໂຄງການປີ 2020**

ໃນການສືບຕໍ່ຈັດຕັ້ງຜັນຂະຫຍາຍພາລະກິດໄລຍະຍາວ ທຄຕລ ເພື່ອຮອງຮັບໃນການປັບປຸງບໍລິການ ໂດຍເນັ້ນໃສ່ ວຽກງານຕົ້ນຕໍແມ່ນຍັງສືບຕໍ່ແຜນງານ 6 ແຜນງານຫລັກ (ຮັກສາເດີມ) ເຊັ່ນ:

ບັນດາໂຄງການຂອງແຕ່ລະແຜນງານມີຄື :

- ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຕະຖານສາກົນ:
- ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ປະຕິບັດຫຼັກເກນ ບາເຊວ II
- ສ້າງລະບົບຂໍ້ມູນເພື່ອການບໍລິຫານ:
- ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ
- ການບໍລິຫານ ແລະ ພັດທະນາ ບຸກຄະລາກອນ
- ພັດທະນາການບໍລິຫານການເງິນ ,ການບໍລິການທີ່ທັນສະໄໝ ແລະ ປະສິດທິພາບການດຳເນີນທຸລະກິດໃຫ້ສູງຂຶ້ນ

3. ແຜນຖານະການເງິນທີ່ສຳຄັນ:

ໃນປີ 2020 ແມ່ນປີທ້າທາຍອີກປີໜຶ່ງສຳລັບການສ້າງລາຍຮັບໃນທ່າມກາງສະພາບແວດລ້ອມເສດຖະກິດບໍ່ເອື້ອອຳນວຍເທົ່າທີ່ຄວນ, ການແຜ່ລະບາດຂອງພະຍາດໂຄວິດ-19 ໃນທົ່ວໂລກ, ລວມທັງໄພທຳມະຊາດຕ່າງໆ ແລະ ສະພາບການແຂ່ງຂັນທີ່ສູງສົມຄວນ. ສະນັ້ນ, ສະເພາະແມ່ນແຜນຖານະການເງິນ ແລະ ໃບລາຍງານຜົນໄດ້ຮັບ ໄດ້ອີງໃສ່ຖານຂໍ້ມູນຕົວເລກຜົນການດຳເນີນທຸລະກິດຕາມການກວດສອບມາດຖານສາກົນ ສະເພາະກິດຈະການ 2019 ເປັນປີຖານໃນການໄລ່ລຽງກຳນົດບັນດາຕົວເລກແຜນທຸລະກິດຕ່າງໆ. ນອກນັ້ນ, ຍັງໄດ້ອີງໃສ່ແຜນລະດັບການຂະຫຍາຍໂຕທາງທຸລະກິດຂອງແຜນໄລຍະຍາວຮອດປີ 2020 ທຄຕລ, ຂໍ້ມູນມະຫາພາກ ແວດລ້ອມທາງເສດຖະກິດຕ່າງໆທີ່ກ່ຽວຂ້ອງຊຶ່ງໄດ້ຮັບຮອງເອົາເປົ້າໝາຍສູ້ຊົນແຕ່ລະດ້ານຄືດັ່ງນີ້:

- ຍອດຊັບສິນ : 49.820.600 ລ້ານກີບ, ທຽບໃສ່ການປະຕິບັດປີ 2019 ເພີ້ມຂຶ້ນ 7,0%,
- ຍອດເງິນຝາກ: 43.100.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2019 ເພີ້ມຂຶ້ນ 7,7%
- ຍອດເງິນກູ້ທັງໝົດ: 28.389.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2019 ເພີ້ມຂຶ້ນ 5,2%,
- ໜີ້ NPL ທັງໝົດ : 832.000 ລ້ານກີບ ທຽບໃສ່ປະຕິບັດ 2019 ເພີ້ມຂຶ້ນ 05% ແລະ ກວມ 2,9% ຂອງສິນທັງໝົດ
- ກຳໄລກ່ອນອາກອນ: 357.000 ລ້ານກີບ ຫຼຸດລົງ 17,1 %.

4. ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

- ແຫຼ່ງທຶນທີ່ໃນປີ 2019 ເພື່ອການຂະຫຍາຍທຸລະກິດ ໃນປີ 2020 ມີທັງໝົດ 210,51 ຕື້ກວ່າກີບ .

- ແຜນຄາດຄະເນການນຳໃຊ້ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທີ່ຄາດຈະວ່າຈະເປັນຊັບສິມບັດຄົງທີ່ໃນປີ 2020 ທຽບໃສ່ແຫຼ່ງທຶນໃນປີ 2019 ມີທັງໝົດ 312,44 ກວ່າຕື້ກີບ. ທັງນີ້ກໍ່ເພື່ອຮອງຮັບຂະຫຍາຍຕາໜ່າງການບໍລິການ, ການພັດທະນາໂຄງການຕ່າງໆຂອງບາວເຊວ2 ແລະ ລະບົບ Core Banking ໃໝ່ ແລະ ຂຶ້ນໃວ້ແຜນສຳຮອງໃນກໍລະນີສຸກເສີນ. ສະນັ້ນ, ແຜນການປີ 2020 ແມ່ນ ທຄຕລ ຈະພະຍາມຄຸ້ມຄອງບໍລິຫານໃນການປະກອບວັດຖຸອຸປະກອນ, ການກໍ່ສ້າງສ້ອມແປງ ທີ່ເຫັນວ່າມີຄວາມຈຳເປັນເລັ່ງໃນໃສ່ໃນການພັດທະນາການບໍລິການຕ່າງໆ ເພື່ອບໍ່ໃຫ້ກະທົບເຖິງແຫຼ່ງທຶນ ທີ່ ທຄຕລ ສາມາດນຳໃຊ້ໃນການຂະຫຍາຍທຸລະກິດໃນປີ ແລະ ບົນພື້ນຖານການໄລ່ລຽງທາງດ້ານຜົນການດຳເນີນທຸລະກິດໃນແຕ່ລະໄລຍະ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ຫົວໜ່ວຍລ້ານກີບ

ລ/ດ	ເນື້ອໃນ	ແຜນງົບປະມານທັງໝົດ 2020		ແຜນຄາດຈະໂອນເຂົ້າຊັບສິມບັດຄົງທີ	
		ລາຍການ	ຈຳນວນເງິນ	ລາຍການ	ຈຳນວນເງິນ
1	ສ້າງຕັ້ງສາຂາ	-	-	-	-
2	ສິດນຳໃຊ້ທີດິນ	6	8.415	6	8.415
3	ໂປຼແກຼມ	44	36.867	44	36.867
4	ສິ່ງປຸກສ້າງ, ສ້ອມແປງ ແລະ ຕົບແຕ່ງ	120	132.318	120	83.971
5	ພາຫານະ	24	3.659	24	3.659
6	ເຄື່ອງເຢັນ ແລະ ສິ່ງຕິດຕັ້ງ ຈັດວາງ	358	5.310	358	5.310
7	ເຄື່ອງຈັກຮັບໃຊ້ຫ້ອງການ	5.871	163.403	5.871	163.403
8	ເຄື່ອງຮັບໃຊ້ສຳນັກງານ ເຝີນິເຈີຕ່າງໆ	1.822	10.824	1.822	10.824
ລວມ		8.245	360.796	8.245	312.449

5. ແຜນຂະຫຍາຍໜ່ວຍບໍລິການ

ໃນປີ 2020 ທຄຕລ ມີແຜນຈະຂະຫຍາຍໜ່ວຍບໍລິການ ທີ່ມີການໄລ່ລຽງຕາມຖານເສດຖະກິດຂອງເປົ້າໝາຍທີ່ມີຄວາມເໝາະສົມ ແລະ ມີຄຸນນະພາບໃນແຕ່ລະໄລຍະ, ຊຶ່ງແຜນສືບຕໍ່ຂະຫຍາຍໜ່ວຍບໍລິການທັງໝົດ 12 ໜ່ວຍບໍລິການ ໃນນັ້ນເປັນແຜນສືບຕໍ່ໃນປີ 2019 ຈຳນວນ 9 ແລະ ແຜນຂະຫຍາຍໃໝ່ 3 ໜ່ວຍບໍລິການດັ່ງລາຍລະອຽດລຸ່ມນີ້:

ລຳດັບ	ແຜນ 2020	ພາກສ່ວນ	ໝາຍເຫດ
1	ໜ່ວຍບໍລິການຕະຫຼາດກົກໂພ	ນະຄອນຫຼວງວຽງຈັນ	ສືບຕໍ່ແຜນປີ 2019
2	ໜ່ວຍບໍລິການເມືອງປາກງື່ມ	ນະຄອນຫຼວງວຽງຈັນ	ສືບຕໍ່ແຜນປີ 2019
3	ໜ່ວຍບໍລິການໂພນຕ້ອງສະຫວາດ	ນະຄອນຫຼວງວຽງຈັນ	ສືບຕໍ່ແຜນປີ 2019
4	ໜ່ວຍບໍລິການຫ້ວຍນ້ຳເຢັນ	ນະຄອນຫຼວງວຽງຈັນ	ສືບຕໍ່ແຜນປີ 2019
5	ໜ່ວຍບໍລິການຫຼັກ 21	ນະຄອນຫຼວງວຽງຈັນ	ແຜນໃໝ່ 2020
6	ໜ່ວຍບໍລິການເກົ້າລ້ຽວ	ນະຄອນຫຼວງວຽງຈັນ	ສືບຕໍ່ແຜນປີ 2019
7	ໜ່ວຍເມືອງວຽງໄຊ	ສາຂາ ຫົວພັນ	ສືບຕໍ່ແຜນປີ 2019
8	ໜ່ວຍສະໜາມໄຊ	ສາຂາ ອັດຕະປື	ສືບຕໍ່ແຜນປີ 2019
9	ໜ່ວຍເມືອງພຽງ (ປ່ຽນຈາກເມືອງເງີນ)	ສາຂາ ໄຊຍະບູລີ	ສືບຕໍ່ແຜນປີ 2019
10	ໜ່ວຍບໍລິການໃໝ່ເຂດ ທາງ A1	ສາຂາ ສະຫວັນນະເຂດ	ແຜນໃໝ່ 2020
11	ໜ່ວຍໂພນແພງ	ສາຂາ ຫຼວງພະບາງ	ອາຄານສາຂາເກົ່າຈະເປັນໜ່ວຍ
12	ໜ່ວຍບໍລິການ ເຂດຖະກິດພິເສດສະເພາະບໍ່ເຕັນ	ສາຂາ ຫຼວງນ້ຳທາ	ສືບຕໍ່ແຜນແຕ່ປີ 2018

6. ແຜນຮັບພະນັກງານໃໝ່

ໃນປີ 2020 ທຄຕລ ໄດ້ຂຶ້ນແຜນສຳລັບຮັບພະນັກງານໃໝ່ໂດຍໄດ້ສັງລວມຄວາມຕ້ອງການພະນັກງານຈາກບັນດາພະແນກ, ສູນ, ສາຂາ ໃນທົ່ວລະບົບທີ່ມີຄວາມຈຳເປັນ. ສຳລັບການປະກອບພະນັກງານໃໝ່ແມ່ນຈະອີງໃສ່ການໄລ່ລຽງຜົນການດຳເນີນທຸລະກິດໃນແຕ່ລະໄລຍະເປັນຕົ້ນຕໍ ເປັນຕົ້ນແມ່ນເພື່ອຮອງຮັບການສ້າງຂະແໜງໃໝ່, ໜ່ວຍບໍລິການຕ່າງໆ, ຊັບຊ້ອນປ່ຽນແທນບັນດາຕຳແໜ່ງງານ, ທົດແທນພະນັກງານອອກການສ້າງເສດຖະກິດຄອບຄົວ, ອອກຮັບບຳເນັດ ແລະ ພະນັກງານເສຍຊີວິດ. ສ່ວນການປະກອບພະນັກງານຢູ່ສາຂາ, ຂັ້ນໜ່ວຍບໍລິການແມ່ນໄດ້ມີການປະເມີນຜົນຈາກການປະຕິບັດຕົວຈິງຂອງວຽກງານຂອງແຕ່ລະທ້ອງຖິ່ນ ແຕ່ການປະຕິບັດຕົວຈິງແມ່ນຈະໄດ້ພິຈາລະນາຄວາມຈຳເປັນແຕ່ລະຂົງເຂດ ແລະ ໄລ່ລຽງຕາມຜົນການດຳເນີນງານຂອງ ທຄຕລ ໃນແຕ່ລະໄລຍະຕື່ມ. ຊຶ່ງແຜນການຮັບພະນັກງານມີຈຳນວນທັງໝົດ **166** ຄົນ (ໃນນັ້ນ, ປະກອບສຳນັກງານໃຫຍ່ 84 ຄົນ, ສາຂາທົ່ວລະບົບ 62, ທົດແທນຕຳແໜ່ງງານ 15 ຄົນ ແລະ ໜ່ວຍບໍລິການໃໝ່ ພາຍໃນນະຄອນຫຼວງເພີ້ມຕື່ມ 5 ຄົນ).

ທ່ານ ປອ ບຸນເຫຼືອ ສິນໄຊວໍຣະວົງ
ປະທານ ສະພາບໍລິຫານ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 24/11/1966

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ປະຫວັດການສຶກສາ:

ປີ 2004	: ປະລິນຍາເອກດ້ານເສດຖະສາດ ທີ່ມະຫາວິທະຍາໄລແຫ່ງຊາດອິດສະຕາລີ, ປະເທດອິດສະຕາລີ.
ປີ 2000	: ປະລິນຍາໂທດ້ານເສດຖະສາດ ທີ່ມະຫາວິທະຍາໄລແຫ່ງຊາດອິດສະຕາລີ, ປະເທດອິດສະຕາລີ.
ປີ 1997	: ປະລິນຍາໂທດ້ານບໍລິຫານທຸລະກິດ ທີ່ມະຫາວິທະຍາໄລທຳມະສາດ, ປະເທດໄທ.
ປີ 1990	: ປະລິນຍາຕີ ແລະ ປະລິນຍາໂທດ້ານຟິຊິກ ແລະ ເລຂາຄະນິດ ທີ່ມະຫາວິທະຍາໄລມົດສະກູ, ປະເທດລັດເຊຍ.

ປະຫວັດການເຮັດວຽກ:

01-2020-ປະຈຸບັນ	: ຮອງລັດຖະມົນຕີ, ກະຊວງການເງິນ
2016-2019	: ຫົວໜ້າກົມນະ�โยบายการเงิน, ກະຊວງການເງິນ
2014-2016	: ຫົວໜ້າກົມງົບປະມານແຫ່ງລັດ, ກະຊວງການເງິນ.
2013-2014	: ຫົວໜ້າກົມນະโยบายเงินตา, ກະຊວງການເງິນ
2010-2012	: ໜຶ່ງໃນຄະນະບໍລິຫານຂອງທະນາຄານພັດທະນາອາຊີ ໃນຂົງເຂດອັບການິສະຖານ, ບັງກະລາດີດ, ປູຊານ, ອິນເດຍ, ລາວ, ທາຈິກິດສະຖານ ແລະ ຕູມິນິດສະຖານ, ປະຈຳການທີ່ສຳນັກງານໃຫຍ່ ທະນາຄານພັດທະນາອາຊີ ເມືອງມະນິລາ ປະເທດ ຟິລິບປິນ.
2007-2011	: ຮອງຫົວໜ້າກົມເງິນຕາຕ່າງປະເທດ, ກະຊວງການເງິນ
2005-2007	: ຫົວໜ້າກົມນະโยบายเสดถะสาดการเงิน, ກະຊວງການເງິນ
2004-2005	: ຫົວໜ້າພະແນກສະຖິຕິການເງິນ, ກົມນະโยบายเงินตา, ກະຊວງການເງິນ.
1996-1998	: ຮອງຫົວໜ້າພະແນກບັນຊີທົ່ວໄປ, ກົມຄັງເງິນ, ກະຊວງການເງິນ
1993-1996	: ພະນັກງານການເງິນ, ກະຊວງການເງິນ
1991-1993	: ອາຈານສອນ ທີ່ມະຫາວິທະຍາໄລແຫ່ງຊາດລາວ

ທ່ານ ຄຳສຸກ ສູນດາຣາ
ຮອງປະທານສະພາບໍລິຫານ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 03/06/1945

ສັນຊາດ : ລາວ

ພາສາ : ລາວ, ອັງກິດ, ຝຣັ່ງ

ປະຫວັດການສຶກສາ:

ປີ 1993 : ມະຫາວິທະຍາໄລຈອດສ์ທາວທີ່ນະຄອນວໍຊິງຕັນ ປະເທດສະຫະລັດອາເມລິກາ.

ປີ 1985 : ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍທີ່ເມືອງ ປານາ ປະເທດອິນເດຍ

ປີ 1974 : ສູນຝຶກອົບຮົມລະຫວ່າງປະເທດ ທີ່ ເມືອງ ນາໂກຍາ ປະເທດຍີ່ປຸ່ນ.

ປີ 1972 : ການຝຶກອົບຮົມ: ດ້ານເສດຖະສາດ ຈາກສະຖາບັນ ຄຸ້ມຄອງເສດຖະກິດ ຂອງອົງການສະຫະປະຊາຊາດ ທີ່ບາງກອກປະເທດໄທ.

ປີ 1969 : ຈົບອຸດົມ ແລະ ລະດັບປະລິນຍາຕຣີ ຈາກປະເທດ ອິດສະຕາລີ, ມະຫາວິທະຍາໄລນິວຊາວເວວ.

ປະຫວັດການເຮັດວຽກ:

ປີ 2015 : ເປັນທີ່ປຶກສາດ້ານການເງິນແລະການທະນາຄານຂອງ ບໍລິສັດລ້ານຊ້າງ ມິເນີໂຣນ ຈຳກັດ (ຊຶ່ງເປັນບໍລິສັດ ໃນເຄືອຂອງກຸ່ມບໍລິສັດໂອເຊຍນາ ແຫ່ງເມືອງ ເມວເບີນ ປະເທດອິດສະຕາລີ).

1995–1996 : ເປັນທີ່ປຶກສາຜູ້ອຳນວຍການ ທີ່ອົງການ ການເງິນ ລະຫວ່າງປະເທດ ກຸ່ມພາກພື້ນ ອາຊີຕາເວັນອອກ ສ່ຽງໃຕ້, ທີ່ນະຄອນວໍຊິງຕັນ ປະເທດອາເມລິກາ.

1990–1994 ແລະ 1997-2005 : ທະນາຄານແຫ່ງ ສປປ ລາວ.

1976–1989 : ຢູ່ທະນາຄານການຄ້າຕ່າງປະເທດລາວ

1970–1975 : ຢູ່ທະນາຄານພັດທະນາລາວ

ທ່ານ ຣສຈ. ປອ. ພູເພັດ ກ້ຽວພິລາວົງ
ກຳມະການອິດສະຫຼະ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 05/02/1974

ສັນຊາດ : ລາວ

ພາສາ : ລາວ, ອັງກິດ, ຍີ່ປຸ່ນ

ປະຫວັດການສຶກສາ:

2000-2003 : ປະລິນຍາເອກເສດຖະສາດ, ມະຫາວິທະຍາໄລ ໂຄເບ, ປະເທດຍີ່ປຸ່ນ

1998-2000 : ປະລິນຍາໂທວິສະວະກຳໂຍທາ, ມະຫາວິທະຍາໄລ ໂອສະກາ, ປະເທດຍີ່ປຸ່ນ

1994-1998 : ປະລິນຍາຕີວິສະວະກຳໂຍທາ, ມະຫາວິທະຍາໄລ ໂອສະກາ, ປະເທດຍີ່ປຸ່ນ

ປະຫວັດການເຮັດວຽກ (1):

2013-ປະຈຸບັນ : ຮອງຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານ ທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

2008-2013 : ຫົວໜ້າພະແນກຄົ້ນຄວ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

2006-2008 : ຮອງຫົວໜ້າພາກເສດຖະສາດ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

2004-2006 : ຮອງຫົວໜ້າພະແນກຄົ້ນຄ້ວາ, ຄະນະເສດຖະສາດ ແລະບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

2003-2004 : ອາຈານສອນ, ຄະນະເສດຖະສາດ ແລະ ບໍລິຫານ ທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

ປະຫວັດການເຮັດວຽກ (2):

2017 : ຮອງສາດສະດາຈານຮັບເຊີນ,ໂຮງຮຽນຫລັງປະລິນ ຍາຕິການສຶກສາການຮ່ວມມືສາກົນມະຫາວິທະຍາໄລ ໂຄເບ, ປະເທດຍີ່ປຸ່ນ

2016/15 : ອາຈານຮັບເຊີນ, ໂຮງຮຽນຫລັງປະລິນຍາຕິການບໍລິ ຫານ, ມະຫາວິທະຍາໄລກຽວໂຕ, ປະເທດຍີ່ປຸ່ນ

2013 : ນັກຄົ້ນຄວ້າຮັບເຊີນອາເມລິກາ-ອາເຊັຍ, ພະແນກເສດ ຖະກິດ, ມະຫາວິທະຍາໄລຮາເວດ, ປະທດອາເມລິກາ

2011 : ຮອງສາດສະດາຈານຮັບເຊີນ ມະຫາວິທະຍາໄລນັນ ຢັງ, ປະທດສິງກະ�โป

2010 : ນັກຄົ້ນຄວ້າຮັບເຊີນ, ມະຫາວິທະຍາໄລລາວານ, ປະເທດຄານາດາ

: ອາຈານຮັບເຊີນ, ໂຮງຮຽນຫລັງປະລິນຍາຕິການພັດ ທະນາສາກົນ, ມະຫາວິທະຍາໄລນາໂກຍາ, ປະເທດຍີ່ປຸ່ນ

: ນັກຄົ້ນຄວ້າຮັບເຊີນ, ສູນຄົ້ນຄົ້ວເສດຖະກິດ, ມະຫາ ວິທະຍາໄລນາໂກຍາ, ປະເທດຍີ່ປຸ່ນ

2005 : ນັກຄົ້ນຄວ້າຮັບເຊີນ, ສະຖາບັນພັດຖະນາເສດຖະກິດ, ປະເທດຍີ່ປຸ່ນ

ທ່ານ ພຸດທະຂັນ ຂັນຕີ
ກຳມະການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 02/05/1970

ສັນຊາດ : ລາວ

ພາສາ : ລາວ, ຫວຽດນາມ ແລະ ລັດເຊຍ

ປະຫວັດການສຶກສາ:

2003-2007 : ສຶກສາຕໍ່ປະລິນຍາໂທ ທີ່ສະຖາບັນການເງິນ ຮ່າໂນ້ຍ, ສສ ຫວຽດນາມ

1989-1994 : ມະຫາວິທະຍາໄລ ດາແກັດສະຕານ ອາດີດສະຫະພາບໂຊຫວຽດ

ປະຫວັດການເຮັດວຽກ:

2016-ປະຈຸບັນ : ເປັນຮອງຫົວໜ້າຄັງເງິນແຫ່ງຊາດ.

2010-2016 : ເປັນຫົວໜ້າພະແນກ ຢູ່ຄັງເງິນແຫ່ງຊາດ, ກະຊວງການເງິນ

2007-2009 : ເປັນຮອງພະແນກຈັດຕັ້ງ-ບໍລິຫານ, ຄັງເງິນແຫ່ງຊາດ, ກະຊວງການເງິນ

2007 : ເປັນວິຊາການ ຢູ່ຄັງເງິນແຫ່ງຊາດ, ກະຊວງການເງິນ

2002-2003 : ເປັນຫົວໜ້າຫ້ອງງົບປະມານ ພະແນກການເງິນເຂດພິເສດໄຊສົມບູນ

1998-2002 : ເປັນຫົວໜ້າຫ້ອງຄັງເງິນ ພະແນກການເງິນເຂດພິເສດໄຊສົມບູນ

1995-1997 : ເປັນວິຊາການຢູ່ພະແນກການເງິນເຂດພິເສດໄຊສົມບູນ

1994 : ເປັນວິຊາການຢູ່ກົມບັນຊີ, ກະຊວງການເງິນ

ທ່ານ ພູຂົງ ຈັນທະຈັກ
ກຳມະການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ	: 17/06/1964
ສັນຊາດ	: ລາວ
ພາສາ	: ລາວ, ອັງກິດ ແລະ ຣັງກາລີ.

ປະຫວັດການສຶກສາ:

ປີ 2009	: ຊັ້ນສູງທິດສະດີການເມືອງ ຈາກໂຮງຮຽນການເມືອງ-ການປົກຄອງ
1983–1988	: ປະລິນຍາໂທດ້ານເສດຖະກິດການເງິນຈາກປະເທດ ຣັງກາລີ.

ປະຫວັດການເຮັດວຽກ:

2016–ປະຈຸບັນ	: ຖືກແຕ່ງຕັ້ງເປັນຜູ້ອຳນວຍການໃຫຍ່ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
2015–2015	: ຖືກແຕ່ງຕັ້ງ ແລະ ດຳລົງຕຳແໜ່ງເປັນຮັກສາການ ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະເປັນປະທານສະພາບໍລິຫານທະນາຄານ ລາວ-ຝຣັ່ງ.
2005–2015	: ແຕ່ງຕັ້ງ ແລະ ດຳລົງຕຳແໜ່ງເປັນຮອງຜູ້ອຳນວຍ ການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
2000–2005	: ເປັນຫົວໜ້າພະແນກຄຸ້ມຄອງສິນເຊື່ອ ຕາມການ ສັບຊ້ອນ.
1998–1999	: ເປັນຫົວໜ້າພະແນກຫ້ອງ ການບໍລິຫານ-ການເງິນ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
1995–1998	: ເປັນຫົວໜ້າ ທຄຕລ ສາຂາຈຳປາສັກ.
ປີ 1994	: ແຕ່ງຕັ້ງເປັນຫົວໜ້າພະແນກຄຸ້ມຄອງສິນເຊື່ອ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
1989–1990	: ເຮັດວຽກເປັນພະນັກງານວິຊາການທີ່ພະແນກຄຸ້ມ ຄອງສິນເຊື່ອ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
1988–1989	: ເປັນພະນັກງານວິຊາການ ທີ່ກະຊວງການເງິນ.

ທ່ານ ວຽງສຸກ ຈຸນທະວົງ
ກຳມະການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ	: 15/08/1964
ສັນຊາດ	: ລາວ
ພາສາ	: ລາວ, ອັງກິດ ແລະ ເຊັກໂກ

ປະຫວັດການສຶກສາ:

2017	: ບຳລຸງທິດສະດີການເມືອງ 45 ວັນ ຈາກໂຮງຮຽນການເມືອງ - ການປົກຄອງ.
1982-1989	: ປະລິນຍາໂທ ສາຂາເສດຖະກິດການຄ້າ ຈາກສາທາລະນະລັດເຊັກ

ປະສົບການການເຮັດວຽກ:

02/2019-ປະຈຸບັນ	: ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດ ລາວ ມະຫາຊົນ
2015 - 02/2019	: ຫົວໜ້າພະແນກຄຸ້ມຄອງສິນເຊື່ອ ແລະ ເປັນກຳມະການສະພາບໍລິຫານບໍລິສັດຫຼັກຊັບ ທຄຕລ-ກທ (BCEL-KT)
2013 - 2015	: ຫົວໜ້າ ທຄຕລ ສາຂາຈຳປາສັກ
2011 - 2013	: ຫົວໜ້າ ທຄຕລ ສາຂາສາລະວັນ
2010 - 2011	: ວ່າການຫົວໜ້າ ທຄຕລ ສາຂາສາລະວັນ
2007 - 2010	: ວ່າການຫົວໜ້າ ທຄຕລ ສາຂາຈຳປາສັກ
2005 - 2007	: ວ່າການຮອງຫົວໜ້າສາຂາຈຳປາສັກ
2003 - 2005	: ຫົວໜ້າຂະແໜງສິນເຊື່ອ ສາຂາຈຳປາສັກ
2001 - 2002	: ຫົວໜ້າໜ່ວຍງານບໍລິການ ສາຂາຈຳປາສັກ
1996 - 2000	: ພະນັກງານວິຊາການສິນເຊື່ອ ທຄຕລ ສາຂາຈຳປາສັກ

ທ່ານ Stephane MANGIAVACCA

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 11/07/1975

ສັນຊາດ : ຝຣັ່ງ

ພາສາ : ຝຣັ່ງ, ອັງກິດ, ສະເປນ,ຈີນ ແລະ ຍີ່ປຸ່ນ

ປະຫວັດການສຶກສາ:

1996-1999 : ສຶກສາທີ່ມະຫາວິທະຍາໄລ Ecole Nationale Superieure des Mines de Saint-Etienne

- ຈົບຊັ້ນສູງສາຂາ ວິສະວະກຳສາດ ດ້ວຍກຽດນິຍົມ
- ເຂົ້າຮ່ວມໂຄງການແລກປ່ຽນກ່ຽວກັບວິສະວະກຳສິ່ງແວດລ້ອມ ທີ່ University of New Brunswick, ປະເທດ Canada
- ຫລັກສູດປະລິນຍາຕາຣິເສດຖະສາດ

ປະສົບການການເຮັດວຽກ:

01/2020 – ປະຈຸບັນ : ຫົວໜ້າຝ່າຍທຸລະກິດຕ່າງປະເທດ, BRED Banque Populaire, ປະເທດ France.

2009-2010 : ຫົວໜ້າຝ່າຍຄຸ້ມຄອງຄວາມສ່ຽງ ແລະ ການປະຕິບັດຕາມ, BRED Banque Populaire, ປະເທດ France.

2001-2009 : ຜູ້ຈັດການອາວຸໂສຝ່າຍກວດສອບ ທີ່ Central Audit, Banque Populaire - Natixis - Coface (BPCE GROUP)

1999-2001 : ຜູ້ຊ່ວຍວຽກກ່ຽວກັບການຄ້າ ທີ່ French Trade Commission, Guangzhou, China

1999 : ພະນັກງານຝຶກຫັດທີ່ EDF, French Company of Electricity, Lyon, France

1998 : ພະນັກງານຝຶກຫັດທີ່ The Yokohama Rubber Company, Hiratsuka, Japan

1997 : ພະນັກງານຝຶກຫັດທີ່ Pechiney-Aluminium, Issoire, France

ໃບມອບສິດ
Proxy

1. ຂ້າພະເຈົ້າ …… ສັນຊາດ……..

I / We …… nationality ……

ເຮືອນເລກທີ່ …… ບ້ານ …… ເມືອງ …… ……

residing at …… Village …… District …… ……

ແຂວງ ……Province……

ເປັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

Being a shareholder of Banque Pour Le Commerce Exterieur Lao Public

ມີຮຸ້ນທີ່ຖືຈຳນວນ……ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ

Holding a total number of ……shares which are equivalent to the same number of votes

2. ຂໍມອບໝາຍສະມາຊິກສະພາບໍລິຫານອິດສະຫຼະລຸ່ມນີ້ (ກະລຸນາເລືອກ 1 ທ່ານ):

Hereby assign the Independent BOD member below (please select one only):

☐ ທ່ານ ຄຳສຸກ ສຸນດາຣາ
Mr. Khamsouk Sundara

☐ ທ່ານຮອງສາສະດາຈານ ປອ. ພູເພັດ ກ້ຽວພິລາວົງ
Assoc. Prof. Dr. Phouphet Kyophilavong

(ຫຼືບຸກຄົນອື່ນ ກະລຸນາລະບຸລາຍລະອຽດ / Or other person, please specify)

ຂໍມອບໝາຍ ທ່ານ/ທ່ານ ນາງ …… ອາຍຸ……ປີ

Hereby assign Mr./Ms. …… age ……

ສັນຊາດ……ຢູ່ເຮືອນເລກທີ່……

Nationality…… residing at……

ບ້ານ…… ເມືອງ …… ແຂວງ ….. ……

Village ……District …… Province….. ……

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະເຈົ້າຢູ່ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທີ່ຈະຈັດຂຶ້ນໃນ ເວລາ 14:30 ໂມງ ຂອງວັນທີ 29 ພຶດສະພາ 2020.

To be my/our proxy to attend and vote on my/our behalf in the Annual General Shareholders' Meeting for year 2019 of the Banque Pour Le Commerce Exterieur Lao Public which will be held at 14:30 PM of 29 May 2020.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງ ຈາກສອງທາງເລືອກລຸ່ມນີ້)

I /We authorize the proxy to vote on my/our behalf in the Meeting as follows (**choose one from the two following options**):

1. ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື
   To grant the proxy to consider and vote in all agendas on my/our behalf as the proxy may deem appropriate; ***or***

2. ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕອ້ງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນ **ເຫັນດີ ຫຼື ບໍ່ເຫັນດີ** ໃນທຸກໆວາລະລຸ່ມນີ້):
   To grant the proxy to vote as per my/our intention indicated in the followings (If you select this option, please choose to vote either ***approve*** or ***disapprove*** in every agenda):

ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2018

Agenda 1: Approve the minutes of the annual general shareholders' meeting of BCEL for the year 2018

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

ວາລະທີ 2: ລາຍງານໂດຍຫຍໍ້ ກ່ຽວກັບ ສະພາບການດຳເນີນງານຂອງ ທຄຕລ ໃນປີ 2019

Agenda 2: A brief report on the operation highlights of BCEL for the year 2019

(ບໍ່ມີການລົງຄະແນນສຽງ / No vote required)

ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາຜົນການດຳເນີນທຸລະກິດປະຈຳປີ 2019

Agenda 3: To consider and approve the business performance results for the year 2019

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

ວາລະທີ 4: ພິຈາລະນາ ແລະ ຮັບຮອງເງິນປັນຜົນປະຈຳປີ 2019

Agenda 4: To consider and approve the dividends for the year 2019.

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2020

Agenda 5: To consider and approve the plan for the year 2020

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງຜູ້ກວດສອບອິດສະຫຼະປະຈຳປີ 2020.

Agenda 6: To consider and approve the appointment of independent auditor for the year 2020.

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

ວາລະທີ 7: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະພາບໍລິຫານຊຸດໃໝ່

Agenda 7: To consider and approve the new Board of Directors

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

4. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.

Any votes made by the proxy contradicting to this Proxy shall be considered as invalid and shall not constitute my/our votes as the shareholder.

5. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໃວ້ ບໍ່ຈະແຈ້ງ ໃຫ້ຖືວ່າ ຂ້າພະເຈົ້າລົງຄະແນນສຽງເຫັນດີ

In case I/we have failed to specify my/our voting intention in any agenda or not clearly specified, my/our vote in such agenda shall be deemed approved.

6. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳເອງທຸກປະການ.

Any action made by the proxy in the meeting in accordance with this Proxy, shall be deemed as having been performed by myself/ourselves in all respects.

ທີ່..... ວັນທີ...../...../2020.
Wrote at……. date…….

ເຊັນຜູ້ຖືຮຸ້ນທີ່ມອບໝາຍ / signed by the shareholder

ເຊັນຜູ້ຕາງໜ້າ /signed by the proxy

ໝາຍເຫດ/Remark:

1. ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ
   The shareholder is required to assign only one proxy to attend and vote in the meeting on the shareholder's behalf.
2. ໃບມອບສິດສະບັບນີ້ຈະຕ້ອງນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ, ທະນາຄານມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ.
   This Proxy must be certified by your most convenient Court Notary Office to ensure its legal validity. BCEL may reject any Proxies or proxy authorizations without endorsement of the Court Notary Office.
3. ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ ພະນັກງານປະຈຳโต๊ะລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.
   The proxy must present to the officers at registration desk his/her valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, this Proxy, and the Invitation to the Meeting.

ຊີວະປະຫວັດຫຍໍ້

ຊື່ ແລະ ນາມສະກຸນ: ທ່ານ ຄຳສຸກ ສູນດາຣາ
ສັນຊາດ: ລາວ
ວັນເກີດ: 03 ມີຖຸນາ 1945
ພາສາ: ລາວ, ອັງກິດ, ຝຣັ່ງ
ເບີໂທລະສັບ: 020 55514235
Email: Khamsouk_sd@yahoo.com

ປະຫວັດການສຶກສາ:

- 1969 ອຸດົມສຶກສາ ແລະ ລະດັບປະລິຍາຕິ ຈາກປະເທດອົດສະຕຣາລີ, ມະຫາວິທະຍາໄລນິວຊາວ ເວລ.

ປະສົບການການເຮັດວຽກ:

- 04/2015 ເປັນທີ່ປຶກສາດ້ານການເງິນ ແລະ ການທະນາຄານ ຂອງບໍລິສັດ ລ້ານຊ້ຽ ມິເນີໂຣ ຈຳກັດ (ເຊິ່ງເປັນບໍລິສັດໃນເຄືອຂອງກຸ່ມບໍລິສັດ ໂອເຊຍນາ ແຫ່ງເມືອງເມວເຍີນ, ປະເທດອົດສະຕຣາລີ).
- 1995-1996 ເປັນທີ່ປຶກສາຜູ້ອຳນວຍການ ທີ່ອົງການການເງິນລະຫວ່າງປະເທດກຸ່ມພາກພື້ນອາຊີຕາເວັນອອກສ່ຽງໃຕ້, ທີ່ນະຄອນວໍຊິງຕັນ, ປະເທດອາເມລິກາ
- 1990-1994 & 1997 - ມີນາ 2005 ທະນາຄານແຫ່ງ ສປປ ລາວ
- 1976-1989 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
- 1970-1975 ທະນາຄານພັດທະນາລາວ

ການຝຶກອົບຮົມ:

- 1993 ຮ່ວມຝຶກອົບຮົມທີ່ ມະຫາວິທະຍາໄລຈອດສ໌ທາວ ທີ່ນະຄອນ ວໍຊິງຕັນ, ປະເທດສະຫະລັດອາເມລິກາ, ສະຖາບັນທະນາຄານໂລກທີ່ນະຄອນວໍຊິງຕັນ, ສະຖາບັນຂອງອົງການການເງິນລະຫວ່າງປະເທດ ທີ່ນະຄອນວໍຊິງຕັນ ແລະ ປະເທດສິງກະໂປ
- 1985 ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍ ທີ່ເມືອງປານາ, ປະເທດອິນເດຍ
- 1974 ສູນເຝິກອົບຮົມລະຫວ່າງປະເທດ ທີ່ເມືອງນາໂກຍາ, ປະເທດຍີ່ປຸ່ນ
- 1972 ອົບຮົມດ້ານເສດຖະສາດ ຈາກສະຖາບັນຄຸ້ມຄອງເສດຖະກິດຂອງອົງການສະຫະປະຊາຊາດທີ່ບາງກອກ, ປະເທດໄທ

ຜົນງານການຂຽນ: *ຂຽນລາຍງານລະດັບຊາດ ກ່ຽວກັບການຄຸ້ມຄອງເງິນເຟີ້ ແລະ ລະບົບການຄຸ້ມຄອງແລກປ່ຽນເງິນຕາ ເພື່ອຮັບໃຊ້ການປຶກສາຫາລືກັບນັກປະເທດ ໃນພາກພື້ນ ESCAP.*

ຊີວະປະຫວັດຫຍໍ້

ຊື່ ແລະ ນາມສະກຸນ: **ຣສຈ. ປອ. ພູເພັດ ກ້ຽວພິລາວົງ**
ສັນຊາດ : **ລາວ**
ວັນ ເດືອນ ປີເກີດ : **05 ກຸມພາ 1974**
ພາສາ: **ລາວ, ອັງກິດ, ຍີ່ປຸ່ນ**
ເບີໂທລະສັບ: **020 55527321**
Email: **Phouphetkyophilavong@gmail.com**

I. ປະຫວັດການສຶກສາ:

- 2000-2003: ປະລິນຍາເອກເສດຖະສາດ, ມະຫາວິທະຍາໄລໂຄເບ, ປະເທດຍີ່ປຸ່ນ
- 1998-2000: ປະລິນຍາໂທວິສະວະກຳໂຍທາ, ມະຫາວິທະຍາໄລໂອສະກາ, ປະເທດຍີ່ປຸ່ນ
- 1994-1998: ປະລິນຍາຕີວິສະວະກຳໂຍທາ, ມະຫາວິທະຍາໄລໂອສະກາ, ປະເທດຍີ່ປຸ່ນ

II. ປະຫວັດການເຮັດວຽກ (1)

- 2013-ປະຈຸບັນ: ຮອງຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
- 2008-2013: ຫົວຫນ້າພະແນກຄົ້ນຄວ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລ ແຫ່ງຊາດ
- 2006-2008: ຮອງຫົວຫນ້າພາກເສດຖະສາດ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
- 2004-2006: ຮອງຫົວຫນ້າພະແນກຄົ້ນຄ້ວາ, ຄະນະເສດຖະສາດແລະບໍລິຫານທຸລະກິດ, ມະຫາວິທະຍາໄລ ແຫ່ງຊາດ
- 2003-2004: ອາຈານສອນ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

ປະຫວັດການເຮັດວຽກ (2)

- 2017 ຮອງສາດສະດາຈານຮັບເຊີນ,ໂຮງຮຽນຫລັງປະລິນຍາຕີການສຶກາການຮ່ວມມືສາກົນມະຫາວິທະຍາໄລໂຄ ເບ, ປະເທດຍີ່ປຸ່ນ
- 2016/15 ອາຈານຮັບເຊີນ, ໂຮງຮຽນຫລັງປະລິນຍາຕີການບໍລິຫານ, ມະຫາວິທະຍາໄລກຽວໂຕ, ປະເທດຍີ່ປຸ່ນ
- 2013 ນັກຄົ້ນຄວ້າຮັບເຊີນອາເມລິກາ-ອາເຊັຍ, ພະແນກເສດຖະກິດ, ມະຫາວິທະຍາໄລຮາເວດ, ປະທດ ອາເມລິກາ
- 2011 ຮອງສາດສະດາຈານຮັບເຊີນ ມະຫາວິທະຍາໄລນັນຢັງ, ປະທດສິງກະ�โป
- 2010 ນັກຄົ້ນຄວ້າຮັບເຊີນ, ມະຫາວິທະຍາໄລລາວານ, ປະເທດຄານາດາ
- 2009 ອາຈານຮັບເຊີນ, ໂຮງຮຽນຫລັງປະລິນຍາຕີການພັດທະນາສາກົນ, ມະຫາວິທະຍາໄລນາໂກຍາ, ປະເທດຍີ່ປຸ່ນ
- 2008 ນັກຄົ້ນຄວ້າຮັບເຊີນ, ສູນຄົ້ນຄົ້ວເສດຖະກິດ, ມະຫາວິທະຍາໄລນາໂກຍາ, ປະເທດຍີ່ປຸ່ນ
- 2005 ນັກຄົ້ນຄວ້າຮັບເຊີນ, ສະຖາບັນພັດຖະນາເສດຖະກິດ, ປະເທດຍີ່ປຸ່ນ

ລະບຽບສຳລັບການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ
Rules for the Annual General Shareholders' Meeting of BCEL

1. ການລົງທະບຽນເພື່ອເຂົ້າຮ່ວມກອງປະຊຸມ/**Registration for attending the meeting**

ຜູ້ເຂົ້າຮ່ວມກອງປະຊຸມທຸກຄົນ ຕ້ອງລົງທະບຽນໃຫ້ຮຽບຮ້ອຍຕາມຂັ້ນຕອນທີ່ ທຄຕລ ກຳນົດໄວ້ ກ່ອນເຂົ້າຮ່ວມກອງປະຊຸມ ແລະ ຕ້ອງອະນຸຍາດໃຫ້ ທຄຕລ ສຳເນົາເອົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ ຫຼື ເອກະສານອື່ນໆທີ່ສາມາດໃຊ້ແທນໄດ້ ເພື່ອເອົາໄວ້ເປັນຫຼັກຖານ.

All attendees must complete registration in accordance with the procedures specified by BCEL before attending the meeting and allow BCEL to photocopy their ID cards or passports or other similar documents as evidence.

ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ຕ້ອງນຳເອົາໜັງສືແຈ້ງສິດເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ (ທີ່ມີເຄື່ອງໝາຍບາໂຄດ) ມາແຈ້ງພ້ອມໃນເວລາລົງທະບຽນ. ກໍລະນີທີ່ບໍ່ມີໃບແຈ້ງສິດເຂົ້າຮ່ວມກອງປະຊຸມແລ້ວນັ້ນ ຈະຖືວ່າການລົງທະບຽນບໍ່ສຳເລັດ ແລະ ຈະສົ່ງຜົນໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ບໍ່ມີສິດລົງຄະແນນສຽງ, ຕັ້ງຄຳຖາມ ຫຼື ມີຄຳເຫັນຕໍ່ທີ່ປະຊຸມ.

Shareholders or proxies must bring and present to the registration desk the Invitation issued by the Lao Securities Exchange (containing bar code). In absence of such Invitation, the registration shall be deemed incomplete and shall lead such shareholders or proxies to have no right to vote, question or make comments in the meeting.

ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳโต๊ะລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບ ສຳເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດ ສະບັບນີ້, ແລະ ໜັງສືເຊີນປະຊຸມ. ຖ້າເອກະສານເຫຼົ່ານີ້ເປັນພາສາຕ່າງປະເທດ ແມ່ນອະນຸຍາດໄດ້ສະເພາະເອກະສານທີ່ເປັນພາສາ ອັງກິດເທົ່ານັ້ນ.

The proxy must present to the officers at registration desk his/her valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, letter of Proxy, and the Invitation to the Meeting. If these documents are in foreign languages, only the documents in English are acceptable.

2. ອົງປະຊຸມ/**Quorum**

ກອງປະຊຸມສາມາດດຳເນີນໄດ້ກໍ່ຕໍ່ເມື່ອມີຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ເຂົ້າຮ່ວມກອງປະຊຸມຢ່າງໜ້ອຍ 2 ຄົນຂຶ້ນໄປ ແລະມີຈຳນວນຮຸ້ນທີ່ຖືເກີນ 51% ຂອງຈຳນວນຮຸ້ນສາມັນທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບຂອງທະນາຄານການຄ້າຕ່າງປະເທດ ລາວ ມະຫາຊົນ.

Shareholders' meeting can commence only if there are at least **2** or more shareholders attending the meeting and their shares shall be more than **51%** of the total shares, pursuant to the Articles of Association of Banque pour le Commerce Exterieur Lao Public.

3. ການດຳເນີນກອງປະຊຸມ/**Rules for proceeding**

3.1 ທ່ານປະທານສະພາບໍລິຫານ ທຄຕລ ເປັນປະທານກ່າວເປີດ ແລະ ນຳພາດຳເນີນກອງປະຊຸມ.

The Chairman of BCEL's Board of Directors will preside over and lead the meeting.

3.2 ທ່ານ ປະທານສະພາບໍລິຫານ ເປັນຜູ້ສະເໜີຫົວຂໍ້ຂອງແຕ່ລະວາລະ ແລະ ເປັນຜູ້ສັ່ງໂຫວດ ຄະແນນແຕ່ລະວາລະ.
The Chairman will propose the title of each agenda and order the voting of each agenda.

3.3 ຜູ້ອຳນວຍການໃຫຍ່ ທຄຕລ ເປັນຜູ້ດຳເນີນສະເໜີ ເນື້ອໃນຂອງແຕ່ ລະວາລະໃນກອງປະຊຸມ.
The General Managing Director of BCEL will present details of each agenda to the meeting.

3.4 ຫຼັງຈາກທີ່ທ່ານຜູ້ອຳນວຍການ ໄດ້ສະເໜີເນື້ອໃນຂອງວາລະແລ້ວ, ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນຫຼືຜູ້ຕາງໜ້າທີ່ມີຄຳຖາມ ຫຼື ຄຳເຫັນຕໍ່ວາລະທີ່ກຳລັງຖືກພິຈາລະນາຢູ່. ກໍລະນີມີຄຳຖາມ ທ່ານຜູ້ອຳນວຍການໃຫຍ່ຈະເປັນຜູ້ໃຫ້ຄຳອະທິບາຍຊີ້ແຈງ. ຈາກນັ້ນ, ຖ້າບໍ່ມີຄຳຖາມໃດໆຕໍ່ແລ້ວ ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນຫຼືຜູ້ຕາງໜ້າລົງມະຕິຕໍ່ວາລະດັ່ງກ່າວ.
After the General Managing Director has presented details of each agenda, the Chairman will ask the Shareholders and Proxies to make necessary comments or questions. Should there is a question, the General Managing Director shall give the answer forthwith. Only when there is no any further question or comment, the Chairman shall ask the Shareholders and Proxies to vote on the agenda

3.5 ຜູ້ເຂົ້າຮ່ວມກອງປະຊຸມ ຕ້ອງປິດສຽງໂທລະສັບ ຫຼື ອຸປະກອນການສື່ສານທຸກຢ່າງ ແລະ ບໍ່ສົ່ງສຽງດັງລົບກວນ ຕະຫຼອດໄລຍະຂອງການດຳເນີນກອງປະຊຸມ.
All attendees must switch off the sound of their mobile phones or any communication devices and must not make any disturbing noise throughout the meeting.

4. ພາສາທີ່ນຳໃຊ້ໃນກອງປະຊຸມ/**Language in the meeting**

ພາສາທີ່ນຳໃຊ້ຢູ່ໃນກອງປະຊຸມແມ່ນພາສາລາວ
The language used in the meeting is Lao language.

5. ຜູ້ມີສິດລົງຄະແນນສຽງ/**Persons eligible to vote**

5.1 ມີແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ຊຶ່ງໄດ້ລົງທະບຽນເຂົ້າຮ່ວມກອງ ປະຊຸມຮຽບຮ້ອຍແລ້ວ ເທົ່ານັ້ນ ທີ່ຈະມີສິດລົງຄະແນນສຽງ.
Only the shareholders or proxies who have registered to attend the meeting are eligible to vote.

5.2 ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ບໍ່ໄດ້ລົງທະບຽນເຂົ້າຮ່ວມກອງປະຊຸມ ແລະ ຜູ້ເຂົ້າຮ່ວມອື່ນ ຈະບໍ່ມີ ສິດໃນການລົງຄະແນນສຽງ.
Any shareholders or proxies who have not registered to attend the meeting and other attendees will not be eligible to vote.

6. ການລົງຄະແນນສຽງ/**Voting**

ປະທານກອງປະຊຸມ ຈະເປັນຜູ້ສະເໜີວາລະທີ່ຕ້ອງການໃຫ້ລົງຄະແນນສຽງ ໂດຍຈະເຊີນ ພຽງແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ທ່ານໃດທີ່ບໍ່ເຫັນດີຕໍ່ບັນຫາທີ່ກອງປະຊຸມໄດ້ນຳ ສະເໜີເທົ່ານັ້ນລົງຄະແນນສຽງ ເພື່ອຄວາມສະດວກໃນການນັບຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການສະເໜີດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
The Chairman of the meeting will propose the agendas that require voting, and only the shareholders or proxies who DO NOT AGREE with the matters proposed by the meeting are invited to vote so as to facilitate vote counting process (meaning that for those who agree with such matters are not necessary to cast a vote).

7. ຜົນສັກສິດຂອງການລົງຄະແນນສຽງ/**Effectiveness of voting**

7.1 ສາລັບ ການລົງມະຕິທົ່ວໄປ, ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.

For ordinary resolutions, the "Disapprove votes" will become effective only if such votes account for more than half of the total number of BCEL shares attending the meeting

7.2 ສາລັບການລົງມະຕິສະເພາະ, ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າ ໜຶ່ງ ສ່ວນສາມຂອງຈຳນວນຄະແນນສຽງທັງໝົດທີ່ເຂົ້າຮ່ວມໃນກອງປະຊຸມ ແລະ ມີຫຼາຍກວ່າ 20% ຈຳນວນຮຸ້ນ ທຄຕລ ທັງ ໝົດ.

For special resolution, the "Disapprove votes" will become effective only if such votes account for more than one third of total votes in the meeting and cover more than 20% of the total number of BCEL shares

7.3 ທຸກບັດລົງຄະແນນສຽງ "ບໍ່ເຫັນດີ" ຕໍ່ວາລະໃດໜຶ່ງທີ່ຖືກສົ່ງໃຫ້ທີ່ປະຊຸມຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງ ຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

Any and All "Disapprove votes" in any Agenda which are submitted to the Meeting after the Meeting has already announced the voting result of such Agenda shall be null and void.

8. ການແຈ້ງຜົນການລົງຄະແນນສຽງ/**Notification of voting result**

ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍ ການນັບຄະແນນສຽງ ຈະຖື ເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.

Attendees will be informed about the voting result forthwith in the meeting with one share equals one vote.

9. ການສະເໜີຄຳຖາມ/**Questions**

9.1 ປະທານກອງປະຊຸມ ຈະສະເໜີໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ມີຄາຖາມ ຫຼື ສະແດງຄາເຫັນ ທີ່ບໍ່ນອນໃນວາລະຂອງກອງປະຊຸມ, ໃນຕອນທ້າຍກອງປະຊຸມພາຍຫຼັງທີ່ສຳເລັດຄົບຖ້ວນທຸກວາລະແລ້ວ. ສຳລັບຜູ້ເຂົ້າ ຮ່ວມອື່ນໆ ຈະບໍ່ມີສິດສະເໜີຄຳຖາມ ຫຼື ມີຄຳເຫັນໃນທີ່ປະຊຸມ, ຍົກເວັ້ນກໍລະນີທີ່ປະທານ ກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າ ຮ່ວມ ດັ່ງກ່າວ ປະກອບຄຳເຫັນຕໍ່ທີ່ປະຊຸມ.

The chairman of the meeting will ask the shareholders or proxies to question or make comments on the issues which are not included in the agenda of the meeting, after the meeting has completed its all agenda. Other attendees are not eligible to question or make any comments, unless the Chairman asks such attendees to question or make comments in the meeting.

9.2 ເມື່ອມີການສະເໜີຈາກປະທານກອງປະຊຸມແລ້ວນັ້ນ, ຜູ້ ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ປະສົງຈະມີ ຄຳຖາມ ຫຼື ສະແດງຄຳເຫັນຕໍ່ ທີ່ປະຊຸມ ຕ້ອງຍົກມືຂຶ້ນ ພ້ອມທັງສະແດງເຄື່ອງໝາຍຕາມທີ່ ທຄຕລ ກຳນົດໃຫ້ ເພື່ອສະແດງວ່າແມ່ນຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ໄດ້ຮັບມອບໝາຍຢ່າງແທ້ຈິງ. ຖ້າຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ໄດ້ຮັບມອບໝາຍ ຫາກບໍ່ສະແດງເຄື່ອງໝາຍດັ່ງກ່າວແລ້ວນັ້ນ ປະທານກອງປະຊຸມ ຫຼື ຄະນະອຳນວຍການ ທຄຕລ ຫຼື ຄະນະຮັບຜິດຊອບກອງປະຊຸມ ມີສິດສະເໜີຄັດຄ້ານຄຳຖາມ ຫຼື ຄຳ ເຫັນຂອງຜູ້ກ່ຽວ ແລະ ກອງປະຊຸມ ຈະບໍ່ມີພັນທະໃນການຕອບຄຳຖາມຂອງຜູ້ກ່ຽວໃນກໍລະນີ ດັ່ງກ່າວ.

Having been asked by the Chairman, any shareholders or proxies desirous to question or make comments in the meeting must raise their hands and show the symbol as given by BCEL to confirm that they are truly shareholders proxies. Should the shareholders or proxies do not show such symbol, the Chairman or BCEL Directors, or Committee in

charge of the meeting may reject questions or comments made by the shareholders or proxies, and in this case the meeting shall not be obliged to answer such questions.

ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
Instruction about the documents and evidence to be presented prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນານຳເອົາໜັງສືເຊີນປະຊຸມ, ໃບເຂົ້າຮ່ວມ ກອງປະຊຸມທີ່ອອກ ໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສິດ (ສຳລັບຜູ້ຕາງໜ້າ) ມາພ້ອມເອກະສານທີ່ສາມາດນຳໃຊ້ ຢັ້ງຢືນຕົນເອງ ຕາມແຕ່ ລະກໍລະນີດັ່ງນີ້:

For convenience in registration process to attend the Annual General Shareholders ' Meeting of Banque Pour Le Commerce Exterieur Lao Public, the shareholders or the proxies who will attend the Meeting are required to bring the Invitation to the Meeting, the Letter for attending the meeting issued by the Lao Securities Exchange and the Proxy (applicable for the proxy only) together with the documents for proof of identity as indicated for each circumstance below:

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ / attendees who are natural persons

ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ

Shall present one of the following documents of their own at the time of registration.

1.1. ບັດປະຈຳຕົວ/identification card

1.2. ສຳມະໂນຄົວ/family book

1.3. ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/passport (for foreign investors)

2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ / attendees who are legal persons

ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ ມາສະແດງ ເວລາລົງທະບຽນ:

Shall present one of the documents as given in 1. above plus one of the following documents at the time of registration:

2.1. ໃບອະນຸຍາດລົງທຶນ/ investment license

2.2. ໃບທະບຽນວິສາຫະກິດ/ Certificate of Enterprise Registration (Affidavit)

2.3. ໃບທະບຽນອາກອນສະບັບຫຼ້າສຸດ/ most recent Tax Certificate

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການ ຕ້ອງໄດ້ນຳເອົາໃບມອບສິດຈາກຜູ້ອຳນວຍການທີ່ມີສິດອຳນາດມາພ້ອມຕື່ມອີກ.

For attendee who is not the authorized director shall have the Proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນ ພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບພາສາຕ່າງ ປະເທດ ແມ່ນອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ທຄຕລ ມີສິດປະຕິເສດເອກະສານອ້າງອີງໃດໆ ທີ່ບໍ່ເປັນໄປຕາມ ການກຳນົດນີ້.

All documents and evidence in a foreign language which are required to present prior to attending the Meeting must be translated into Lao language and the translation shall be certified by an acceptable translation company. The foreign language is permitted only for English. BCEL has the right to reject any documents contradicting this provision.

ຄຳແນະນຳ ກ່ຽວກັບ ການລົງຄະແນນສຽງ
Vote Instruction

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງສຳລັບທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ຜູ້ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວ ກ່ຽວກັບ ການລົງຄະແນນໃນແຕ່ລະວາລະ ທະນາຄານ ຈະບັນທຶກການລົງຄະແນນສຽງ ໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງແນນສຽງອີກ.

The attendees will be given a ballot for voting in each agenda requiring a vote at the time of registration. For the case of proxy in which the voting in each agenda has been clearly specified by the shareholder in the Proxy, BCEL will record such votes at the time of the registration and the proxy will not be required to vote.

2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).

Only the shareholders who DO NOT AGREE with the matters proposed by the meeting are invited to vote (meaning that for those who agree with such appointment are not necessary to make any vote)

3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້. ໃນນັ້ນ ຕ້ອງໄດ້ລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນ ທຄຕລ ທີ່ທ່ານຖືຢູ່ (ຖ້າບໍ່ມີຂໍ້ມູນດັ່ງກ່າວຢູ່ໃນບັດລົງຄະແນນສຽງ) ແລະ ໃຫ້ໝາຍຕີນກາໃສ່ຫ້ອງ ບໍ່ເຫັນດີ.

To vote, kindly fill in the distributed ballot in which you must specify clearly about your name and surname, and the total number of BCEL shares you are holding (if such information is not available in the ballot) and mark a cross in the Disapprove box.

4. ຫລັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ.

After you have clearly casted your vote, kindly raise your hand with the ballot, so the organizers can take the ballot and count the votes.

5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.

You will be informed about the voting result right in the meeting with one share equals one vote.

6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງ ຈຳນວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.

The Disapproval votes will become effective only if such votes account for more than half of the total number of BCEL shares attending the meeting.

ໝາຍເຫດ/Remark:

1. ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.

Any attendees who failed to make registration will not be eligible to votes.

2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

All disapprove votes in any Agenda which is submitted to the Meeting after the Meeting has announced the voting result of such Agenda shall be deemed invalid.

ແຜນທີ່ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ/ BCEL shareholders' Meeting